# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ຕຸລາ 2025
ປີທີ 14
ສະບັບທີ 1038
ລາຍສັປປະດາ


## ກອງປະຊຸມຄົບຄະນະກຳມາທິການກົດໝາຍ




(ສພຊ) - ກອງປະຊຸມຄົບຄະນະກຳມາທິການກົດໝາຍ (ກກໝ) ປະຈຳປີ 2025 ໄດ້ໄຂຂຶ້ນຢ່າງເປັນທາງການໃນວັນເສົາທີ 18 ຕຸລານີ້ ທີ່ເມືອງວັງວຽງ ແຂວງວຽງຈັນພາຍໃຕ້ການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ໂດຍການເຂົ້າຮ່ວມຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ກຳມະການສູນກາງພັກ,

ອ່ານຕໍ່ໜ້າ 4

## ສຳມະນາວຽກງານສົ່ງເສີມ ແລະ ພັດທະນາຄົນພິການ




(ສພຊ) - ກອງປະຊຸມສຳມະນາກ່ຽວກັບວຽກງານສົ່ງເສີມ ແລະ ພັດທະນາຄົນພິການ ໄດ້ຈັດຂຶ້ນໃນວັນທີ 14-16 ຕຸລານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ (ສພຊ) ແລະ ທ່ານ ບຸນຕາ ເທບພະວົງ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ); ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານກຳມາທິການ, ຮອງເລຂາທິການ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງທີ່ກ່ຽວຂ້ອງ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກວທສ, ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ, ບັນດາຊ່ຽວຊານ ແລະ ວິທະຍາກອນ ຈາກທັງພາຍໃນແລະຕ່າງ

ອ່ານຕໍ່ໜ້າ 4



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ຕ້ອງມີມາດຕະຖານຮັບປະກັນຄວາມສັກສິດຂອງກົດໝາຍ ໂຄສະນາ, ອະທິບາຍ, ສຶກສາໃຫ້ພົນລະເມືອງທຸກຄົນມີສະຕິແລະຄວາມຊິນເຄີຍໃນການດຳລົງຊີວິດ ແລະ ເຮັດວຽກຕາມລັດຖະທຳມະນູນ ແລະ ກົດໝາຍ; ດຳເນີນການປັບປຸງ, ບູລະນະບັນດາອົງການປະຕິບັດ ແລະ ປົກປ້ອງກົດໝາຍ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 483)

ວຽກງານການເມືອງ-ແນວຄິດ ເປັນເສັ້ນໄໝແດງທີ່ສອດຫ້ອຍໄປໃນທຸກວຽກງານ "...ແຕ່ໃດໆມາ ພັກເຮົາຖືວ່າວຽກງານການເມືອງ-ແນວຄິດ ແລະ ທິດສະດີ ແມ່ນວຽກງານທີ່ມີຄວາມສຳຄັນ; ມັນເປັນເສັ້ນໄໝແດງທີ່ສອດຫ້ອຍໄປໃນທຸກວຽກງານຂອງຄະນະພັກທຸກຂັ້ນ ແລະ ທຸກເວລາ..."

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 379)

ອ່ານຕໍ່ສະບັບໜ້າ

## ຖອດຖອນບົດຮຽນການສ້າງ ແລະ ປັບປຸງກົດໝາຍ



(ສພຊ) - ກອງປະຊຸມກ່ຽວກັບກົນໄກປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງໃນການສ້າງ ແລະ ປັບປຸງກົດໝາຍ ໄດ້ຈັດຂຶ້ນໃນວັນທີ 16-17 ຕຸລານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງ

ອ່ານຕໍ່ໜ້າ 5

## ສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ພາລະບົດບາດຂອງ ສພຊ ແລະ ສພຂ




(ສພຂ) - ວັນທີ 16-17 ຕຸລານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຜົ້ງສາລີ ໄດ້ມີກອງປະຊຸມເຜີຍແຜ່ອົບຮົມເພື່ອຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ຄຳ

ອ່ານຕໍ່ໜ້າ 5

## ກຜງສ ປະຊຸມຄົບຄະນະ ປະຈຳປີ 2025



(ສພຊ) - ກອງປະຊຸມຄົບຄະນະກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ປະຈຳປີ 2025 ໄດ້ໄຂຂຶ້ນຢ່າງເປັນທາງການໃນວັນທີ 17 ຕຸລານີ້ ທີ່ສະພາແຫ່ງຊາດ (ສພຊ) ພາຍໃຕ້ການເປັນປະທານຂອງທ່ານ ປອ. ລີເບີ ລີບົວປາວປະທານກຳມາທິການແຜນການ, ການເງິນແລະການກວດສອບ ໂດຍການເຂົ້າຮ່ວມຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານປະທານ-ຮອງປະທານກຳມາທິການຂອງ ສພຊ, ບັນດາທ່ານກຳມະການຂອງກຜງສ ຈາກເຂດເລືອກຕັ້ງທົ່ວປະເທດ ພ້ອມດ້ວຍທ່ານຮອງລັດຖະມົນຕີກະຊວງການເງິນ, ທ່ານຮອງປະທານອົງການກວດກາແຫ່ງ

ອ່ານຕໍ່ໜ້າ 5

## ກຳມາທິການບັນດາເຜົ່າ ປະຊຸມຄົບຄະນະປະຈຳປີ



ອ່ານຕໍ່ໜ້າ 7



ປະໂຫຍດ ແລະ ຂໍ້ຄວນລະວັງ... (ໜ້າ 8)



ລັດຖະສະພາເປຣູ... (ໜ້າ 9)

ເບິ່ງໄວ້ ໄດ້ບົດຮຽນ
ວິເສດ ສະແຫວງສຶກສາ

ພ້ອມກັນສ້າງມິດຕະພາບ... (ໜ້າ 12)

# ກອງປະຊຸມຄົບຄະນະ ກວທສ ປະຈຳປີ 2025




(ສພຊ) - ກອງປະຊຸມຄົບຄະນະກຳມາທິການວັດທະນະທຳ-ສັງຄົມ (ກວທສ) ປະຈຳປີ 2025 ໄດ້ຈັດຂຶ້ນໃນວັນທີ 13 ຕຸລານີ້ ທີ່ເມືອງວັງວຽງ ແຂວງວຽງຈັນພາຍໃຕ້ການເປັນປະທານຂອງທ່ານ ບຸນຕາ ເທບພະວົງປະທານກຳມາທິການວັດທະນະທຳ-ສັງຄົມ, ເຂົ້າຮ່ວມໂອ້ລົມໂດຍທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ (ສພຊ); ມີບັນດາທ່ານປະທານ-ຮອງປະທານກຳມາທິການ, ຮອງເລຂາທິການ ແລະ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ບັນດາທ່ານຮອງລັດຖະມົນຕີ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການສັງກັດກວທສ, ຮອງປະທານອົງການກາແດງລາວ, ຫົວໜ້າຫ້ອງການຄະນະກຳມະການແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປລາວ, ບັນດາທ່ານຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນ ຈາກ ສພຊ ແລະ ຂະແໜງການທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ທ່ານບຸນຕາເທບພະວົງ ໃຫ້ຮູ້ວ່າ: ກອງປະຊຸມຄົບຄະນະປະຈຳປີ 2025 ຄັ້ງນີ້ ຖືວ່າເປັນກອງປະຊຸມເທື່ອສຸດທ້າຍຂອງກຳມາທິການວັດທະນະທຳ-ສັງຄົມ, ສະພາແຫ່ງຊາດ ຊຸດທີ IX ເພື່ອຮັບຟັງການລາຍງານ, ປະກອບຄຳເຫັນ ແລະຮັບຮອງເອົາການສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2025 ແລະ ທິດທາງແຜນການເຄື່ອນໄຫວປີ 2026, ການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ທິດທາງແຜນການ 5 ປີ (2026-2030) ຂອງ ກວທສ; ບົດລາຍງານການຈັດຕັ້ງປະຕິບັດບັນດາຄາດໝາຍໃນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2025 ແລະທິດທາງແຜນການປີ2026 ແລະ ທິດທາງແຜນການເຄື່ອນໄຫວ 5 ປີ (2026-2030) ຂອງບັນດາຂະແໜງການໃນຂົງເຂດວັດທະນະທຳ-ສັງຄົມ.

ຜູ້ແທນກອງປະຊຸມ ໄດ້ພ້ອມກັນເຊີດຊູຄວາມຄວາມຮັບຜິດຊອບ ແລະ ສຸມສະຕິປັນຍາ, ຄວາມຮູ້ຄວາມສາມາດໃນການຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ໂດຍສົມທຽບໃສ່ພຶດຕິກຳຕົວຈິງຢູ່ທ້ອງຖິ່ນ ແລະ ຂະແໜງການ ເພື່ອເປັນພື້ນຖານໃນການນຳໄປຄົ້ນຄວ້າ, ປຶກສາຫາລື ແລະ ປັບປຸງບັນດາເອກະສານ ໃຫ້ມີເນື້ອໃນທີ່ຄົບຖ້ວນ, ຖືກຕ້ອງ, ສອດຄ່ອງ ແລະ ສົມບູນ ສາມາດຮັບຮອງ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

ທ່ານ ຄຳໃບ ດຳລັດ ຕີລາຄາສູງຕໍ່ຜົນສຳເລັດທີ່ກຳມາທິການວັດທະນະທຳ-ສັງຄົມຍາດມາໄດ້ຕະຫຼອດໄລຍະເວລາເກືອບ 5 ປີຜ່ານມາ ທັງເນັ້ນໜັກໃຫ້ເພີ່ມທະວີການປະຕິບັດພາລະບົດບາດເປັນຕົວແທນຂອງປະຊາຊົນໃຫ້ເລິກເຊິ່ງກວ່າເກົ່າ ໂດຍຕ້ອງສືບຕໍ່ລົງພົບປະ, ຮັບຟັງ ແລະ ເກັບກຳຄວາມມຸ່ງມາດປາຖະໜາຂອງປະຊາຊົນ ໂດຍສະເພາະບັນຫາທີ່ພົ້ນເດັ່ນໃນປັດຈຸບັນ ເປັນຕົ້ນ: ຄຸນນະພາບການສຶກສາ, ການເຂົ້າເຖິງການບໍລິການສາທາລະນະສຸກ, ບັນຫາສິ່ງເສບຕິດ, ການວ່າງງານຂອງຊາວໜຸ່ມ ແລະ ການປົກປ້ອງຄຸ້ມຄອງແຮງງານ; ຍົກສູງປະສິດທິຜົນຂອງການຕິດຕາມການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ທີ່ສົ່ງຜ່ານສາຍດ່ວນ 156 ແລະ ຊ່ອງທາງຕ່າງໆຂອງສະພາແຫ່ງຊາດ ໃຫ້ສິ້ນສຸດແລະເປັນຮູບປະທຳ; ຍົກສູງຄຸນນະພາບວຽກງານດ້ານນິຕິບັນຍັດໃຫ້ທັນກັບການປ່ຽນແປງຂອງຍຸກສະໄໝ ໃນການສ້າງ ແລະ ປັບປຸງກົດໝາຍ, ຕ້ອງຮັບປະກັນບໍ່ພຽງດ້ານເນື້ອໃນທີ່ຄົບຖ້ວນຮັດກຸມ, ແຕ່ຕ້ອງມີວິໄສທັດຍາວໄກ, ສາມາດຮອງຮັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມແລະການຫັນເປັນດິຈິຕອນ; ເອົາໃຈໃສ່ຄົ້ນຄວ້າສ້າງນິຕິກຳໃໝ່ໆ ທີ່ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສັງຄົມ ເຊັ່ນ: ກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບການຄຸ້ມຄອງຂໍ້ມູນຂ່າວສານທາງອອນລາຍ, ການປົກປ້ອງເດັກໃນສະພາບແວດລ້ອມດິຈິຕອນ ແລະ ການສົ່ງເສີມອຸດສາຫະກຳວັດທະນະທຳສ້າງສັນ; ເສີມຂະຫຍາຍພາລະບົດບາດໃນການພິຈາລະນາ ແລະ ຕັດສິນບັນຫາສຳຄັນຂອງຊາດ ໂດຍອີງໃສ່ຂໍ້ມູນແລະຜົນປະໂຫຍດຂອງປະຊາຊົນເປັນໃຈກາງ ໃນການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ຕ້ອງວິເຄາະວິໄຈໃຫ້ເລິກເຊິ່ງເຖິງຜົນກະທົບດ້ານສັງຄົມ ແລະ ວັດທະນະທຳ ແລະ ຕ້ອງຮັບປະກັນວ່າໂຄງການລົງທຶນຕ່າງໆຂອງລັດ ໄດ້ຖືກຈັດສັນຢ່າງສົມເຫດສົມຜົນ, ຕອບໂຈດບັນຫາຈິງຂອງປະຊາຊົນ ແລະປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs); ຫັນການຕິດຕາມກວດກາຈາກແບບຂະບວນການໄປສູ່ການປະເມີນຜົນກະທົບ ເຊິ່ງຕ້ອງເພີ່ມທະວີການຕິດຕາມກວດກາແບບມີຈຸດສຸມ ໂດຍສະເພາະການຈັດຕັ້ງປະຕິບັດນະໂຍບາຍໃຫຍ່ຂອງພັກ-ລັດ ເຊັ່ນ: ການປະຕິຮູບການສຶກສາ, ການປັບປຸງຄຸນນະພາບການບໍລິການສາທາລະນະສຸກ, ການພັດທະນາສີມືແຮງງານ ແລະ ການອະນຸລັກຮັກສາມໍລະດົກວັດທະນະທຳ.

**(ນາງ ອາລິນ ສຸພົມມະປະດິດ)**



# ສຳມະນາວິທະຍາສາດ ຊຸກຍູ້ ການພັດທະນາເສດຖະກິດ-ສັງຄົມ



(ສພຊ) - ກອງປະຊຸມສຳມະນາປຶກສາຫາລືນະໂຍບາຍລະດັບຊາດ ພາຍໃຕ້ຫົວຂໍ້ "ການລົງທຶນເພື່ອຊຸກຍູ້ການພັດທະນາ ແລະ ການເຕີບໂຕເສດຖະກິດ-ສັງຄົມ" ເຊິ່ງຕິດພັນກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການກະກຽມຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ X (2026-2030) ໄດ້ຈັດຂຶ້ນເມື່ອວັນທີ 16 ຕຸລາຜ່ານມາທີ່ໂຮງແຮມດອນຈັນພາເລດ ໂດຍການເປັນປະທານຂອງທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ, ມີບັນດາຜູ້ຕາງໜ້າຈາກກະຊວງ, ອົງການຈັດຕັ້ງພັກ-ລັດ, ຜູ້ປະກອບການຈາກພາກທຸລະກິດ, ບັນດາຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ທ່ານ ປອ. ລີເບີ ລີບົວປາວ ໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ ມີຈຸດປະສົງຕົ້ນຕໍເພື່ອປຶກສາຫາລື ແລະ ແລກປ່ຽນບົດຮຽນລະຫວ່າງສະພາແຫ່ງຊາດ, ລັດຖະບານ, ຄູ່ຮ່ວມພັດທະນາ ແລະ ນັກລົງທຶນ ເພື່ອປະເມີນປະສິດທິພາບ ແລະ ປະສິດທິຜົນຂອງການລົງທຶນໃນໄລຍະການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ IX ແລະ ວາລະແຫ່ງຊາດ; ເພື່ອຕິດຕາມກວດກາ ແລະ ຕີລາຄາສະຫຼຸບຜົນສຳເລັດ, ບັນຫາຄົງຄ້າງແລະສິ່ງທ້າທາຍທີ່ຕິດພັນກັບການລົງທຶນຂອງພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດ ໂດຍອີງໃສ່ກົດໝາຍ ແລະ ບັນດາມະຕິຂອງສະພາແຫ່ງຊາດ; ເພື່ອຍົກສູງຄວາມຮູ້ຄວາມສາມາດ, ເພີ່ມທະວີຄວາມຮູ້ທາງດ້ານວິຊາສະເພາະ ແລະ ບົດຮຽນຕົວຈິງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ພະນັກງານທີ່ກ່ຽວຂ້ອງ ເພື່ອຮັບປະກັນປະສິດທິພາບໃນການປະຕິບັດໜ້າທີ່; ເພື່ອກະກຽມເນື້ອໃນໃຫ້ແກ່ກອງປະຊຸມສະພາແຫ່ງຊາດ,ເປັນການກະກຽມຄວາມພ້ອມດ້ານຂໍ້ມູນ ແລະ ເນື້ອໃນສຳລັບການສະຫຼຸບທ້າຍສະໄໝຂອງແຜນ 5 ປີ ຄັ້ງທີ IX, ການສ້າງແຜນ 5 ປີ ຄັ້ງທີ X ໂດຍສະເພາະແມ່ນການກະກຽມໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະມາເຖິງ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານຫຼາຍຫົວຂໍ້ທີ່ສຳຄັນເຊັ່ນ: ຜົນສຳເລັດໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025); ບົດລາຍງານຈາກພາກສ່ວນລັດຖະບານ, ຄູ່ຮ່ວມພັດທະນາ ແລະນັກລົງທຶນ ກ່ຽວກັບປະສິດທິຜົນຂອງການລົງທຶນເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ບົດຄົ້ນຄວ້າວິທະຍາສາດກ່ຽວກັບການລົງທຶນເພື່ອການພັດທະນາ; ເນື້ອໃນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 10 ເຊິ່ງປະກອບມີ: ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປີ 2025; ບົດລາຍງານຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ກ່ຽວກັບຜົນການກວດກາໃນໄລຍະ 5 ປີຜ່ານມາ ແລະ ທິດທາງໃນ 5 ປີຕໍ່ໜ້າ.

ກອງປະຊຸມຄັ້ງນີ້ ຖືເປັນບາດກ້າວສຳຄັນໃນການລະດົມຄວາມຄິດຄວາມເຫັນ, ຖອດຖອນບົດຮຽນ ແລະ ແລກປ່ຽນປະສົບການຈາກທຸກພາກສ່ວນ ເພື່ອນຳໄປປັບປຸງນະໂຍບາຍ, ກົດໝາຍ ແລະ ກົນໄກການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງຂຶ້ນ ທັງເປັນການຮັບປະກັນໃຫ້ແກ່ການກະກຽມເນື້ອໃນເພື່ອຮັບໃຊ້ກອງປະຊຸມສະພາແຫ່ງຊາດໃຫ້ມີຄຸນນະພາບ ແລະ ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດຊາດໃນໄລຍະໃໝ່.



# ສຳມະນາວຽກງານເສດຖະກິດດ້ານສຸຂະພາບ ແລະ ການສ້າງຄວາມຊຳນານງານດ້ານສາທາລະນະສຸກ



(ສພຊ) - ກອງປະຊຸມສຳມະນາກ່ຽວກັບວຽກງານເສດຖະສາດດ້ານສຸຂະພາບແລະການສ້າງຄວາມຊຳນານງານດ້ານສາທາລະນະສຸກ ໃຫ້ແກ່ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການສັງກັດກຳມາທິການວັດທະນະທຳ-ສັງຄົມ ໄດ້ຈັດຂຶ້ນໃນວັນທີ 17-18 ຕຸລານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນຕາ ເທບພະວົງ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ), ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານກຳມາທິການ ແລະ ຮອງເລຂາທິການສະພາແຫ່ງຊາດ, ຜູ້ຕາງໜ້າອົງການ HEALTHPOVERTY ACTION (HPA) ແລະ ອົງການ GAVI, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ທີ່ເປັນກຳມະການຂອງ ກວທສ, ຊ່ຽວຊານ ແລະ ວິທະຍາກອນຈາກບັນດາກະຊວງ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງພ້ອມດ້ວຍແຂກຖືກເຊີນ.

ທັງນີ້, ກໍເພື່ອຍົກສູງຄວາມຮັບຮູ້ກ່ຽວກັບການລົງທຶນທາງດ້ານສຸຂະພາບແຫ່ງຊາດ, ການຮັບປະກັນຄວາມຍືນຍົງທາງດ້ານງົບປະມານ ແລະ ຍຸດທະສາດການຈັດຫາງົບປະມານ, ການນຳໃຊ້ຍຸດທະສາດ ແລະ ທາງເລືອກດ້ານນະໂຍບາຍທີ່ເໝາະສົມ ໃນການຈັດສັນຊັບພະຍາກອນທີ່ສົມດຸນກັບການພັດທະນາເສດຖະກິດ-ສັງຄົມຂອງຊາດ; ປຶກສາຫາລືການສ້າງຕັ້ງຄະນະ ສສຊ ກ່ຽວກັບສຸຂະພາບ ແລະ ການສັກຢາປ້ອງກັນພະຍາດ ໂດຍສະເພາະວຽກງານຕິດຕາມກວດກາ, ສ້າງ ແລະ ຜັນຂະຫຍາຍ ບັນດານິຕິກຳທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ຈັດສັນງົບປະມານດ້ານສາທາລະນະສຸກ ທີ່ຕິດພັນກັບວຽກງານວັກຊີນກັນພະຍາດ.

ທ່ານບຸນຕາເທບພະວົງ ກ່າວວ່າ: ວຽກງານສາທາລະນະສຸກ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນຫຼາຍ ຕິດພັນກັບຊີວິດ, ສຸຂະພາບຂອງປະຊາຊົນ ແລະ ສິ່ງຜົນຕໍ່ການພັດທະນາຊັບພະຍາກອນມະນຸດ ກໍຄືການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ເພື່ອພັດທະນາວຽກງານດັ່ງກ່າວ ມັນຮຽກຮ້ອງໃຫ້ມີແຜນງົບປະມານແຫ່ງລັດ ເພື່ອຈັດສັນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ເວົ້າລວມ, ເວົ້າສະເພາະກໍຄືແຜນພັດທະນາວຽກງານສາທາລະນະສຸກ ເປັນຕົ້ນ: ການບໍລິການສຸຂະພາບ, ການໃຫ້ວັກຊີກກັນພະຍາດແລະອື່ນໆ. ພ້ອມກັນນັ້ນ, ປະສິດທິພາບຂອງວຽກງານສາທາລະນະສຸກຍັງບໍ່ທັນສູງເທົ່າທີ່ຄວນຍ້ອນງົບປະມານ ແລະ ການລົງທຶນທີ່ນຳໃຊ້ເຂົ້າໃນວຽກງານດັ່ງກ່າວຍັງຈຳກັດ; ງົບປະມານສຳລັບປັບປຸງໂຮງໝໍ, ສຸກສາລາ, ການຈັດຊື້ຢາ ແລະ ເຄື່ອງມືແພດທີ່ທັນສະໄໝ ຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງປະຊາຊົນໄດ້ຢ່າງທົ່ວເຖິງ ເຊິ່ງໃນເງື່ອນໄຂສະພາບງົບປະມານມີຈຳກັດ ພວກເຮົາຕ້ອງມີຍຸດທະສາດເພື່ອຈັດຫາງົບປະມານ, ລວມທັງການກຳນົດນະໂຍບາຍ ແລະການຕິດຕາມກວດກາວຽກງານດັ່ງກ່າວ.

ກອງປະຊຸມໄດ້ຮັບຟັງການລາຍງານຜົນຂອງກອງປະຊຸມສຳມະນາຄັ້ງຜ່ານມາ ກ່ຽວກັບການຊຸກຍູ້ສົ່ງເສີມການມີສ່ວນຮ່ວມ ແລະ ການນຳພາເພື່ອສ້າງຄວາມຍືນຍົງດ້ານການເງິນສາທາລະນະສຸກ ແລະ ການມີສຸຂະພາບດີທຸກຖ້ວນໜ້າໃນ ສປປລາວ; ຂັ້ນຕອນ, ຂະບວນການຄົ້ນຄວ້າ ແລະ ພິຈາລະນາໃນການຈັດສັນງົບປະມານດ້ານສຸຂະພາບ; ຄວາມຕ້ອງການດ້ານງົບປະມານສາທາລະນະສຸກ;ການກວດກາ ແລະ ທົບທວນຄືນ ຂະບວນການຄົ້ນຄວ້າຈັດສັນງົບປະມານ; ການສົນທະນາກ່ຽວກັບນະໂຍບາຍເພື່ອສັງລວມຫຍໍ້ນະໂຍບາຍກ່ຽວກັບພາສີດ້ານສຸຂະພາບ, ຊ່ອງວ່າງດ້ານງົບປະມານ ແລະການຈັດຫາງົບປະມານສຳລັບວັກຊີນກັນພະຍາດ; ການສະເໜີສ້າງຕັ້ງຄະນະສະມາຊິກສະພາແຫ່ງຊາດ ກ່ຽວກັບສຸຂະພາບ ແລະ ການສັກຢາປ້ອງກັນພະຍາດ; ການແລກປ່ຽນຄວາມຄິດເຫັນດ້ານນະໂຍບາຍ ແລະ ເຫດການຈຳລອງ.

ບັນດາຜູ້ແທນໄດ້ພ້ອມກັນເອົາໃຈໃສ່ດ້ວຍຄວາມຮັບຜິດຊອບໃນການຕິດຕາມ, ເກັບກຳ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ແລະ ປະກອບຄວາມຄິດຄວາມເຫັນຢ່າງກົງໄປກົງມາ ແລະ ຊັກຖາມໃນບັນຫາຕ່າງໆທີ່ວິທະຍາກອນ ແລະ ຊ່ຽວຊານໄດ້ນຳມາສະເໜີເພື່ອໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ.

**(ນາງ ອາລິນ ສຸພົມມະປະດິດ)**



# ພະນັກງານ ສພຊ ຢ້ຽມຊົມຫ້ອງມູນເຊື້ອການທູດຂະແໜງການຕ່າງປະເທດ




(ສພຊ) - ຕອນບ່າຍວັນຈັນທີ 13 ຕຸລາຜ່ານມາ, ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ (ສພຊ) ຈຳນວນ 20 ທ່ານ ນຳໂດຍທ່ານ ຮສ. ປອ. ລຳພຶງ ວໍລະດີ ຮອງຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ, ກຳມາທິການການຕ່າງປະເທດ ໄດ້ເຂົ້າຢ້ຽມຊົມຫ້ອງມູນເຊື້ອການທູດຂອງຂະແໜງການຕ່າງປະເທດ ເນື່ອງໃນໂອກາດວັນການທູດລາວ ຄົບຮອບ 80 ປີ (12/10/1945-12/10/2025) ທີ່ກະຊວງການຕ່າງປະເທດ, ໂດຍການຕ້ອນຮັບຈາກພະແນກເອກະສານ, ຫ້ອງສະໝຸດແລະມູນເຊື້ອການທູດ, ຫ້ອງການກະຊວງການຕ່າງປະເທດ.

ການໄປທັດສະນະສຶກສາຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສາຍພົວພັນທາງການທູດລາວ ເຮັດໃຫ້ພະນັກງານ-ລັດຖະກອນພາຍໃນ ສພຊ ຮັບຮູ້ແລະເຂົ້າໃຈວຽກງານຕ່າງປະເທດ ຫຼາຍຂຶ້ນກວ່າເກົ່າ.

**(ສອນສັກ ວັນວິໄຊ)**



# JICA ຢ້ຽມຊົມຫ້ອງມູນເຊື້ອ ສພຊ



(ສພຊ) - ຕອນສວາຍວັນທີ 14 ຕຸລາ 2025, ກົມສື່ມວນຊົນ, ຄະນະເລຂາທິການສະພາແຫ່ງຊາດ (ສພຊ) ໄດ້ຕ້ອນຮັບ ແລະ ນຳພາ ອົງການຮ່ວມມືສາກົນຍີ່ປຸ່ນຫຼືໄຈກາ(JICA) ນຳໂດຍທ່ານ ຄຳປະສິດ ເທບວົງສາສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ແລະ ທ່ານ ໂກເບະ ໂນບູຢູກິ(KobeNobuyuki)ຫົວໜ້າອົງການໄຈກາປະຈຳປະເທດລາວ ຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ.

ການມາຢ້ຽມຊົມຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ,ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດຊຸດທີ I ເຖິງ ສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX); ຈາກນັ້ນ, ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ຂອງ ສພຊ ເຮັດໃຫ້ຜູ້ແທນອົງການໄຈກາ ມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະໜ້າທີ່ຂອງອົງການນິຕິບັນຍັດ ສປປລາວ ຫຼາຍຂຶ້ນ.

**(ນາງ ນິດຕາ ຄຸນປາກດີ)**





## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຮອງປະທານສະພາແຫ່ງຊາດ (ສພຊ), ບັນດາທ່ານປະທານ-ຮອງປະທານກຳມາທິການພາຍໃນ ສພຊ, ສະມາຊິກສະພາແຫ່ງຊາດທີ່ສັງກັດເປັນຄະນະກຳມະການຂອງ ກກໝ ພ້ອມດ້ວຍທ່ານຮອງລັດຖະມົນຕີກະຊວງ-ອົງການທີ່ກ່ຽວຂ້ອງ ແລະ ແຂກຖືກເຊີນ.

ທ່ານ ຄຳແພງ ວິລະພັນ ກ່າວວ່າ: ກອງປະຊຸມຄົບຄະນະຄັ້ງນີ້ ເປັນກອງປະຊຸມເທື່ອສຸດທ້າຍຂອງກຳມາທິການກົດໝາຍ, ສະພາແຫ່ງຊາດ ຊຸດທີ IX ເຊິ່ງຈະໄດ້ຮັບຟັງການລາຍງານ, ປະກອບຄຳເຫັນ ແລະ ຮັບຮອງເອົາການສະຫຼຸບຕີລາຄາການເຄື່ອນໄຫວວຽກງານໃນໄລຍະ 5 ປີທີ່ຜ່ານມາ, ຕີລາຄາສະເພາະການເຄື່ອນໄຫວປີ2025, ຖອດຖອນບົດຮຽນໃນການເຄື່ອນໄຫວຜ່ານມາ ແລະ ຄາດຄະເນການເຄື່ອນໄຫວວຽກງານຂອງກຳມາທິການກົດໝາຍໃນຕໍ່ໜ້າ ເຊິ່ງຈະໄດ້ຮວມເອົາພາລະບົດບາດຂອງກຳມາທິການຍຸຕິທຳເຂົ້າຕື່ມ ໂດຍມີເນື້ອໃນດັ່ງນີ້: 1) ບົດສະຫຼຸບການເຄື່ອນໄຫວວຽກງານ 5 ປີ (2021-2025), ຖອດຖອນບົດຮຽນ ແລະ ຄາດຄະເນການເຄື່ອນໄຫວວຽກງານຂອງກຳມາທິການກົດໝາຍໃນຕໍ່ໜ້າ; 2) ແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X; ມະຕິກອງປະຊຸມຄົບຄະນະຂອງກຳມາທິການກົດໝາຍປະຈຳປີ 2025.

ບັນດາທ່ານທີ່ເຂົ້າຮ່ວມໄດ້ເຊີດຊູຄວາມຄວາມຮັບຜິດຊອບ ແລະ ສຸມສະຕິປັນຍາ, ຄວາມຮູ້ຄວາມສາມາດແລະນຳໃຊ້ເວລາທີ່ຈຳກັດນີ້ ເພື່ອຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ໂດຍສົມທຽບໃສ່ພຶດຕິກຳຕົວຈິງຢູ່ທ້ອງຖິ່ນ ແລະ ຂະແໜງການຂອງຕົນ ເພື່ອເປັນພື້ນຖານໃຫ້ກຳມາທິການນຳໄປຄົ້ນຄວ້າ, ປຶກສາຫາລື ແລະ ປັບປຸງບັນດາເອກະສານໃນກອງປະຊຸມຄັ້ງນີ້ໃຫ້ມີເນື້ອໃນທີ່ຄົບຖ້ວນ, ຖືກຕ້ອງ, ສອດຄ່ອງແລະສົມບູນສາມາດຮັບຮອງເອົາ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີບາງຄຳເຫັນຕໍ່ທິດທາງວຽກງານໃນຕໍ່ໜ້າຄື:

1. ກຳມາທິການກົດໝາຍ ແລະຍຸຕິທຳ ຈະຖືກໂຮມເຂົ້າກັນເປັນກຳມາທິການດຽວ; ຍ້ອນແນວນັ້ນ ຈະຕ້ອງສືບຕໍ່ນຳພາວຽກງານການເມືອງ-ແນວຄິດໃຫ້ດີ ແລະ ປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນ ໃຫ້ມີຄວາມສອດຄ່ອງກັບສະພາບການຕົວຈິງໃນໄລຍະໃໝ່ເພື່ອຮັບປະກັນຄວາມສາມັກຄີເປັນອັນໜຶ່ງອັນດຽວຢູ່ພາຍໃນ ແນໃສ່ຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການ ໃຫ້ຄົບຖ້ວນ, ມີຄຸນນະພາບສູງ.

2. ຮີບຮ້ອນປະສານສົມທົບກັບບັນດາກະຊວງ-ອົງການທີ່ເປັນເຈົ້າຂອງກົດໝາຍ ແລະ ບັນດາກຳມາທິການທີ່ກ່ຽວຂ້ອງ ເພື່ອກະກຽມແຜນການສ້າງແລະປັບປຸງກົດໝາຍ 5 ປີ (2026-2030) ແລະ ປີ 2026 ໃຫ້ສຳເລັດໂດຍໄວ.

3. ກະກຽມຮ່າງແຜນການຕິດຕາມກວດກາການປະຕິບັດລັດຖະທຳມະນູນ, ກົດໝາຍ ແລະນິຕິກຳໃຕ້ກົດໝາຍສຳລັບ 5 ປີຕໍ່ໜ້າ ແລະ ປະຈຳປີ 2026 ຂອງກຳມາທິການ ໃຫ້ສອດຄ່ອງກັບໜ້າທີ່ການເມືອງຂອງຕົນໃນຕໍ່ໜ້າ.

4. ປະສານສົມທົບກັບບັນດາກະຊວງ-ອົງການທີ່ເປັນເຈົ້າຂອງກົດໝາຍ ເພື່ອສ້າງເງື່ອນໄຂຕ່າງໆ ໃນການນຳເອົາບັນດາກົດໝາຍທີ່ໄດ້ປະກາດໃຊ້ແລ້ວລົງໂຄສະນາເຜີຍແຜ່ຢູ່ສູນກາງ ແລະ ທ້ອງຖິ່ນ ເຮັດໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ຮັບຮູ້, ເຂົ້າໃຈຢ່າງກວ້າງຂວາງ ດ້ວຍຫຼາຍວິທີ, ຫຼາຍຮູບການ; ຍົກສູງຄວາມຮັບຜິດຊອບຕໍ່ການໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍໃນຂົງເຂດສະພາແຫ່ງຊາດໃຫ້ທົ່ວເຖິງເພື່ອສ້າງຄວາມຮັບຮູ້ເຂົ້າໃຈ ແລະ ຍົກສູງສະຕິເຄົາລົບແລະປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ທົ່ວສັງຄົມໃຫ້ສູງຂຶ້ນ; ກະກຽມວຽກງານຮອບດ້ານໃຫ້ແກ່ການສະຫຼອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 35 ປີ ໃນວັນທີ 15 ສິງຫາ 2026.

5. ປະສານສົມທົບກັບບັນດາກະຊວງ-ອົງການທີ່ມີສິດສະເໜີໃຫ້ຄະນະປະຈຳສະພາແຫ່ງຊາດພິຈາລະນາຕີຄວາມໝາຍ ແລະ ອະທິບາຍກົດໝາຍ ແນະນຳບັນດາວິສາຫະກິດຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດແລະປະຊາຊົນລາວບັນດາເຜົ່າ ຈັດຕັ້ງປະຕິບັດວຽກງານການຕີຄວາມໝາຍ ແລະ ອະທິບາຍກົດໝາຍ ໃຫ້ຖືກຕ້ອງ, ສອດຄ່ອງກັບມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 30/ຄປຈ, ລົງວັນທີ 07 ກຸມພາ 2022 ເພື່ອຍົກລະດັບວຽກງານດັ່ງກ່າວໃຫ້ຫຼາຍຂຶ້ນທັງທາງດ້ານປະລິມານ ແລະຄຸນນະພາບ, ມີຄວາມວ່ອງໄວ, ມີຄຳຕອບຄຳອະທິບາຍທີ່ຈະແຈ້ງ, ຊັດເຈນ, ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການຕ່າງໆ.

6. ສືບຕໍ່ປະສານສົມທົບ, ພົວພັນຮ່ວມມື ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານການສ້າງ ແລະ ປັບປຸງກົດໝາຍ, ຕິດຕາມກວດກາ, ໂຄສະນາເຜີຍແຜ່, ຕີຄວາມໝາຍກົດໝາຍ ແລະ ວຽກງານຍຸຕິທຳ ກັບຕ່າງປະເທດ ເພື່ອຍົກສູງຄຸນນະພາບຂອງວຽກງານດັ່ງກ່າວ.

7. ສືບຕໍ່ປັບປຸງແບບແຜນການນຳພາ-ຊີ້ນຳ, ວິທີເຮັດວຽກ ຂອງຄະນະນຳກຳມາທິການກົດໝາຍ ແລະ ຍຸຕິທຳ, ຂັ້ນກົມ ແລະຂັ້ນພະແນກ ໃຫ້ແທດເໝາະກັບຕົວຈິງ; ເພີ່ມທະວີການປະສານສົມທົບກັບບັນດາກຳມາທິການ, ກົມຕ່າງໆ ພາຍໃນສະພາແຫ່ງຊາດແລະກະຊວງ-ອົງການຕ່າງໆ ໃຫ້ກົມກຽວກັນ, ຮັບປະກັນການປະຕິບັດໜ້າທີ່ວຽກງານໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**(ກົງທະນຸຄຳ ພິພັດເສລີ)**



## ສຳມະນາວຽກງານ...

(ຕໍ່ຈາກໜ້າ 1)

ປະເທດ, ພະນັກງານ-ລັດຖະກອນຂອງສພຊແລະບັນດາຂະແໜງການທີ່ກ່ຽວຂ້ອງ ພ້ອມດ້ວຍແຂກຖືກເຊີນ. ຈຸດປະສົງເພື່ອສ້າງຄວາມຮັບຮູ້ເຂົ້າໃຈກ່ຽວກັບວຽກງານການສົ່ງເສີມແລະພັດທະນາຄົນພິການ ໃຫ້ແກ່ຜູ້ເຂົ້າຮ່ວມ ເພື່ອຈະໄດ້ນຳໄປກຳນົດທິດທາງແຜນການ, ວິທີການ ແລະ ມາດຕະການຈັດຕັ້ງປະຕິບັດໃນການແກ້ໄຂບັນຫາໃນຕໍ່ໜ້າ ພ້ອມທັງມີການຕິດຕາມກວດກາ ແລະ ຊຸກຍູ້ວຽກງານດັ່ງກ່າວນີ້ ຢູ່ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ໄດ້ຮັບຜົນດີ.

ກອງປະຊຸມໄດ້ຮັບຟັງພາບລວມກ່ຽວກັບການປະຕິບັດກົດໝາຍ, ນະໂຍບາຍ, ຍຸດທະສາດ, ແຜນປະຕິບັດງານແຫ່ງຊາດເພື່ອຄົນພິການ; ຜົນໄດ້ຮັບ, ສິ່ງທ້າທ້າຍ ແລະ ທິດທາງໃນຕໍ່ໜ້າ ໃນການຄຸ້ມຄອງບໍລິຫານກອງທຶນຄົນພິການ, ການຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ພັດທະນາຄົນພິການຂອງສະມາຄົມຄົນພິການແຫ່ງຊາດ; ການສົ່ງເສີມ ແລະ ພັດທະນາຄົນພິການ ຂອງສະມາຄົມຄົນພິການແຂວງຈຳປາສັກ; ການຊ່ວຍເຫຼືອເດັກນ້ອຍພິການ; ການສົ່ງເສີມ ແລະພັດທະນາຄົນພິການໂອທິດສະຕິກ; ການສົ່ງເສີມ ແລະ ພັດທະນາຄົນພິການທາງສະໝອງ; ການສົ່ງເສີມ ແລະ ພັດທະນາວິຊາຊີບຄົນພິການຕາ; ການສົ່ງເສີມ ແລະ ພັດທະນາວິຊາຊີບຄົນພິການແລະຜູ້ດ້ອຍໂອກາດ; ການສົ່ງເສີມ ແລະ ພັດທະນາແມ່ຍິງພິການ; ການບໍລິການເພື່ອການພັດທະນາແບບມີສ່ວນຮ່ວມຂອງຄົນພິ ການ; ການສົ່ງເສີມ ແລະ ພັດທະນາດ້ານຫັດຖະກຳໃຫ້ກັບຄົນພິການ; ສະພາບການດ້ານເສດຖະກິດ, ສັງຄົມ ແລະ ການເມືອງ ຂອງ ສປປລາວ ຕໍ່ກັບການສົ່ງເສີມ ແລະ ພັດທະນາຄົນພິການ; ການສົ່ງເສີມ ແລະ ພັດທະນາດ້ານການສຶກສາ ແລະ ກິລາ ໃຫ້ກັບຄົນພິການ; ການປ້ອງກັນບໍ່ໃຫ້ເກີດຄວາມພິການ, ການປິ່ນປົວ ແລະ ຟື້ນຟູສຸຂະພາບຂອງຄົນພິການ; ການສົ່ງເສີມ ແລະ ພັດທະນາດ້ານສິລະປະ, ວັດທະນະທຳແລະການພັກຜ່ອນ ໃຫ້ກັບຄົນພິການ; ການພັດທະນາສີມືແຮງງານ, ການເຝິກອົບຮົມວິຊາຊີບ ແລະ ການສົ່ງເສີມການມີວຽກເຮັດງານທຳໃຫ້ກັບຄົນພິການ; ບົດບາດຂອງສະມາຊິກສະພາແຫ່ງຊາດ ຕໍ່ວຽກງານການສົ່ງເສີມ ແລະ ພັດທະນາຄົນພິການຂອງສາກົນ ແລະ ກົນໄກການຕິດຕາມກວດກາວຽກງານການສົ່ງເສີມແລະພັດທະນາຄົນພິການຂອງລັດຖະສະພາສາກົນ. ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນດ້ວຍຄວາມຮັບຜິດຊອບສູງແລະໃຊ້ເວລາທີ່ຈຳກັດໃຫ້ເປັນປະໂຫຍດທີ່ສຸດ ໃນການຕິດຕາມ, ເກັບກຳ, ແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ, ສ້າງສັນ ແລະ ຊັກຖາມໃນບັນຫາຕ່າງໆ ທີ່ວິທະຍາກອນ ແລະ ຊ່ຽວຊານ ໄດ້ນຳມາສະເໜີ ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ.

ທ່ານຄຳໃບ ດຳລັດ ກ່າວວ່າ: ກອງປະຊຸມສຳມະນາຄັ້ງນີ້ ມີຄວາມໝາຍຄວາມສຳຄັນຫຼາຍ ເພາະ ສປປລາວ ເປັນປະເທດໜຶ່ງທີ່ຖືກສົງຄາມຮຸກຮານ ແລະ ຖືກຖິ້ມລະເບີດຫຼາຍທີ່ສຸດໃນໂລກ ເຊິ່ງມາຮອດປັດຈຸບັນ ຍັງມີປະຊາຊົນຜູ້ບໍລິສຸດເປັນຈຳນວນບໍ່ໜ້ອຍ ທີ່ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກດັ່ງກ່າວ ອັນເປັນສາເຫດຂອງການສູນເສຍທັງຊີວິດ, ຊັບສິນ ແລະ ຈຳນວນໜຶ່ງໄດ້ກາຍມາເປັນຄົນພິການ. ຜ່ານມາລັດຖະບານຍາມໃດກໍມີຄວາມເປັນຫ່ວງເປັນໃຍ ແລະ ພັດທະນາວຽກຄົນພິການຕະຫຼອດມາ, ອັນສຳຄັນ ແມ່ນໄດ້ໃຫ້ສັດຕະຍາບັນ ແລະ ເຂົ້າເປັນພາຄີຂອງສົນທິສັນຍາສາກົນວ່າດ້ວຍສິດຄົນພິການ(CRPD) ໃນວັນທີ 25 ກັນຍາ 2009; ນອກນີ້, ຍັງມີກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງບັນດາຂະແໜງການ ກ່ຽວກັບການສົ່ງເສີມ, ປົກປ້ອງ ແລະ ພັດທະນາຄົນພິການ. ເຖິງຢ່າງໃດກໍຕາມ, ຜ່ານການຈັດຕັ້ງປະຕິບັດຜ່ານມາ ເຫັນວ່ານະໂຍບາຍ, ນິຕິກຳກ່ຽວກັບຄົນພິການທີ່ວາງອອກຍັງບໍ່ທັນຄົບຖ້ວນ, ງົບປະມານທີ່ນຳໃຊ້ເຂົ້າໃນວຽກງານດັ່ງກ່າວມີຈຳກັດ, ບຸກຄະລາກອນທີ່ມີວິຊາສະເພາະດ້ານຄົນພິການມີຈຳນວນໜ້ອຍ, ການມີສ່ວນຮ່ວມຂອງຄົນພິການຍັງມີໜ້ອຍ, ບາງຄັ້ງຍັງມີການຈຳແນກ, ກີດກັ້ນການມີສ່ວນຮ່ວມຂອງຄົນພິການ ແລະ ອື່ນໆ.

ກອງປະຊຸມໄດ້ຮຽກຮ້ອງໃຫ້ບັນດາທ່ານຜູ້ແທນທີ່ເຂົ້າຮ່ວມໃນຄັ້ງນີ້ນຳເອົາຄວາມຮັບຮູ້ເຂົ້າໃຈຈາກການສຳມະນາດັ່ງກ່າວ ໄປຜັນຂະຫຍາຍເຂົ້າໃນການສົ່ງເສີມ, ປົກປ້ອງແລະພັດທະນາຄົນພິການ ໃຫ້ໄດ້ຮັບຜົນດີຍິ່ງໆຂຶ້ນ.





## ຖອດຖອນ...

(ຕໍ່ຈາກໜ້າ 1)

ຊາດ; ເຂົ້າຮ່ວມມີທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ, ບັນດາທ່ານຮອງປະທານກຳມາທິການກົດໝາຍ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາທ່ານທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດພ້ອມດ້ວຍພະນັກງານທີ່ເປັນເສນາທິການໃຫ້ແກ່ການສ້າງ ແລະ ປັບປຸງກົດໝາຍ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກ່າວວ່າ: ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອຖອດຖອນບົດຮຽນການຈັດຕັ້ງປະຕິບັດພາລະບົດບາດ, ສິດແລະໜ້າທີ່ ໃນວຽກງານສ້າງ ແລະ ປັບປຸງກົດໝາຍຂອງແຕ່ລະພາກສ່ວນ ແລະ ການປະສານງານເຊິ່ງກັນແລະກັນໃຫ້ມີຄວາມຄ່ອງຕົວ ແນໃສ່ເຮັດໃຫ້ວຽກງານສ້າງ ແລະ ປັບປຸງກົດໝາຍ ມີປະສິດທິພາບ ແລະ ປະສິດທິຜົນ ຮັບປະກັນການປະຕິບັດພາລະບົດບາດເປັນເສນາທິການໃນວຽກງານສ້າງ ແລະ ປັບປຸງກົດໝາຍໃນຕໍ່ໜ້າ; ແລກປ່ຽນຄຳເຫັນ, ສົນທະນາເຊິ່ງກັນແລະກັນ ເພື່ອຊອກຫາວິທີແກ້ໄຂບັນຫາທີ່ເປັນຂໍ້ຄົງຄ້າງ, ຈຸດອ່ອນຕ່າງໆ ເພື່ອສ້າງຄວາມເປັນເອກະພາບກັນໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ທັງເປັນການບຳລຸງຍົກລະດັບໃຫ້ແກ່ພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກງານສ້າງ ແລະ ປັບປຸງກົດໝາຍ ໃຫ້ມີຄວາມຮູ້ເລິກເຊິ່ງຂຶ້ນກວ່າເກົ່າ.

ກອງປະຊຸມໄດ້ຮັບຟັງການສະເໜີກ່ຽວກັບກົນໄກການສ້າງນິຕິກຳຂອງປະເທດຟີລິບປິນ, ກົນໄກການກວດກາຄວາມສອດຄ່ອງທາງດ້ານກົດໝາຍ, ກົນໄກການເປັນເສນາທິການໃຫ້ແກ່ລັດຖະບານໃນການພິຈາລະນາຮັບຮອງເອົາຮ່າງກົດໝາຍ, ກົນໄກການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ, ກົນໄກການເປັນເສນາທິການໃຫ້ແກ່ປະທານປະເທດໃນການປະກາດໃຊ້ກົດໝາຍ; ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຮັບຟັງ, ຄົ້ນຄວ້າ ແລະ ປະກອບຄຳເຫັນຢ່າງຈິງຈັງ ເຮັດໃຫ້ກອງປະຊຸມຄັ້ງນີ້ ສຳເລັດຜົນຕາມລະດັບຄາດໝາຍທີ່ວາງໄວ້.

**(ກົງທະນູຄຳ ພິພັດເສລີ)**



## ສ້າງຄວາມຮັບຮູ້...

(ຕໍ່ຈາກໜ້າ 1)

ໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ), ມີທ່ານ ພົຕ. ສົມພອນ ມິດຕະພອນ ເລຂາຄະນະບໍລິຫານງານພັກແຂວງ, ບັນດາຮອງເລຂາພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ແລະ ສະມາຊິກຄະນະກຳມະການປົກຄອງແຂວງ, ຫົວໜ້າ 2 ກອງບັນຊາການ, ປະທານສານປະຊາຊົນແຂວງ, ຫົວໜ້າອົງການໄອຍະການປະຊາຊົນແຂວງ, ປະທານແນວລາວສ້າງຊາດແຂວງ, ປະທານສະຫະພັນນັກຮົບເກົ່າແຂວງ, ປະທານ ແລະ ເລຂາ 3 ອົງການຈັດຕັ້ງມະຫາຊົນແຂວງ, ບັນດາຫົວໜ້າອົງການລັດທຽບເທົ່າພະແນກການຂັ້ນແຂວງ, ບັນດາເລຂາພັກເມືອງ ແລະ ປະທານຄະນະກຳມະການປົກຄອງເມືອງ, ບັນດາອຳນວຍການໂຮງຮຽນ, ໂຮງໝໍແລະບໍລິສັດລັດວິສາຫະກິດພາກລັດ-ເອກະຊົນ, ພະນັກງານຈາກ ສພຊ ແລະ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນກ່າວເປີດວ່າ: ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອເຜີຍແຜ່, ໂຄສະນາກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ແນໃສ່ສ້າງຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານດັ່ງກ່າວ ໃຫ້ມີຄວາມເລິກເຊິ່ງ; ເປັນການຊຸກຍູ້, ແນະນຳ ແລະສ້າງຄວາມເປັນເອກະພາບກ່ຽວກັບໂຄງປະກອບກົງຈັກການຈັດຕັ້ງແລະບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ, ການກະກຽມໃຫ້ແກ່ການດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ທັງເປັນຂໍ້ມູນ, ບ່ອນອີງໃຫ້ແກ່ການຄົ້ນຄວ້າ, ປັບປຸງກົງຈັກການຈັດຕັ້ງຂອງສະພາໃນຊຸດຕໍ່ໄປ ໃຫ້ເປັນລະບົບ, ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງເພື່ອຮັບປະກັນໃຫ້ແກ່ການເສີມຂະຫຍາຍ ແລະ ການຍົກສູງບົດບາດການນຳພາຂອງພັກເວົ້າລວມ ໂດຍສະເພາະການຍົກສູງບົດບາດຂອງສະພາ ໃຫ້ມີຄວາມເຂັ້ມແຂງ, ເລິກເຊິ່ງ, ຮອບດ້ານ ສົມຄູ່ກັບການເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ. ທ່ານຍັງຮຽກຮ້ອງບັນດາທ່ານທີ່ເຂົ້າຮ່ວມຈົ່ງເອົາໃຈໃສ່ຕິດຕາມຮັບຟັງການສະເໜີບົດຮຽນແຕ່ລະເນື້ອໃນທີ່ໄດ້ກ່າວມານັ້ນ ເພື່ອໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ, ບັນຫາໃດທີ່ບໍ່ທັນເຂົ້າໃຈຫຼືບໍ່ທັນຈະແຈ້ງ ກໍໃຫ້ມີການສະເໜີຖາມ ແລະ ປຶກສາຫາລືແລກປ່ຽນບົດຮຽນນຳກັນ ເພື່ອຄວາມຮັບຮູ້ ແລະ ຮັບປະກັນໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍ.

ທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ສະເໜີບົດຮຽນໃນຫົວຂໍ້ການຍົກສູງພາລະບົດບາດໃນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ແນະນຳກ່ຽວກັບການຄົ້ນຄວ້າໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນຂອງສະພາປະຊາຊົນຂັ້ນແຂວງ, ການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຊຸດຕໍ່ໄປ. ຈາກນັ້ນ, ຜູ້ແທນກອງປະຊຸມກໍໄດ້ເປັນເຈົ້າການແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກວ້າງຂວາງ ແລະ ກົງໄປກົງມາ.

**(ຂ່າວ: ພຸດສະດີ ແສງຈອມຄູນ, ພາບ: ນາງ ບົວແສງ ສຸລີວົງ)**





## ກຜງສ ...

(ຕໍ່ຈາກໜ້າ 1)

ລັດ, ທ່ານຮອງປະທານອົງການກວດສອບແຫ່ງລັດ, ທ່ານຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວແລະແຂກຖືກເຊີນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຕົ້ນຕໍຂອງກອງປະຊຸມ ແມ່ນເພື່ອພິຈາລະນາ ແລະຮັບຮອງເອົາບົດສະຫຼຸບການຈັດຕັ້ງປະຕິບັດວຽກງານປະຈຳປີ 2025 ແລະ ປະຈຳໄລຍະ 5 ປີ (2021-2025) ຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ; ຮັບຟັງການລາຍງານຂອງກະຊວງການເງິນ, ທະນາຄານແຫ່ງສປປລາວ, ອົງການກວດສອບແຫ່ງລັດແລະອົງການກວດກາແຫ່ງລັດພ້ອມທັງຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນໃສ່ບັນດາເອກະສານສຳຄັນຂອງຊາດດັ່ງກ່າວທີ່ລັດຖະບານໄດ້ຈັດຕັ້ງປະຕິບັດຜ່ານມາຕາມມະຕິກອງປະຊຸມສະພາແຫ່ງຊາດ ເປັນຕົ້ນ: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ, ແຜນການກວດສອບ, ແຜນການກວດກາ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ປະຈຳປີ 2025 ແລະ ໄລຍະ 5 ປີຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າເພື່ອກະກຽມເນື້ອໃນໃຫ້ແກ່ວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX. ພ້ອມດຽວກັນນີ້, ຍັງໄດ້ປຶກສາຫາລືແລກປ່ຽນຄຳເຫັນຮ່ວມກັນ ເພື່ອຊອກຫາວິທີແກ້ໄຂບັນຫາທີ່ຍັງຄົງຄ້າງໃຫ້ສຳເລັດຕາມແຜນການ.

ບັນດາຜູ້ແທນໄດ້ເຊີດຊູຄວາມຮັບຜິດຊອບ ແລະສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ ແລະ ສົນທະນາແລກປ່ຽນຄຳຄິດຄຳເຫັນຢ່າງກວ້າງຂວາງ ແລະ ເລິກເຊິ່ງ ເພື່ອຊອກໃຫ້ເຫັນຜົນສຳເລັດຂອງການປະຕິບັດໜ້າທີ່ຂອງກຳມະການຂອງກຳມາທິການ ໃນການປະຕິບັດ 3 ພາລະບົດບາດ: ດ້ານນິຕິບັນຍັດ, ດ້ານຕົກລົງບັນຫາສຳຄັນພື້ນຖານຂອງຂອງປະເທດຊາດແລະດ້ານການຕິດຕາມກວດກາ; ຕີລາຄາສາເຫດທີ່ພາໃຫ້ມີຜົນສຳເລັດ, ຂໍ້ຄົງຄ້າງ ແລະ ຮ່ວມກັນຄົ້ນຄວ້ານຳສະເໜີວິທີແກ້ໄຂ ທັງໃນສະເພາະໜ້າ ແລະ ຍາວນານ ແນໃສ່ຮັບປະກັນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ສ້າງສະຖຽນລະພາບທາງດ້ານການເງິນ-ເງິນຕາຂອງຊາດໃຫ້ໝັ້ນຄົງ, ປະກອບສ່ວນຍົກສູງຄຸນນະພາບ ແລະ ປະສິດທິຜົນໃນການປະຕິບັດໜ້າທີ່ເປັນຕົວແທນຂອງປະຊາຊົນ ໃຫ້ນັບມື້ສູງຂຶ້ນ.

ໃນໂອກາດດັ່ງກ່າວ, ທ່ານ ສົມມາດ ພົລເສນາ ໄດ້ມີຄຳເຫັນໂອ້ລົມ ເຊິ່ງໄດ້ຕີລາຄາສູງຕໍ່ຜົນສຳເລັດທີ່ກຳມະການຂອງກຳມາທິການແຜນການ, ການເງິນແລະການກວດສອບ ຍາດມາໄດ້ໃນການປະຕິບັດພາລະບົດບາດຂອງຕົນໃນໄລຍະຜ່ານມາ ພ້ອມທັງເນັ້ນໜັກໃຫ້ກຳມາທິການ ສືບຕໍ່ຍົກສູງບົດບາດໃນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ, ການກວດສອບ, ການກວດກາ ໂດຍສະເພາະການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ເລິກເຊິ່ງ ແລະ ເຂັ້ມງວດກວ່າເກົ່າ; ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນເຂົ້າໃນການສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງກັບຂົງເຂດເສດຖະກິດ-ການເງິນ ໃຫ້ສອດຄ່ອງກັບສະພາບການຕົວຈິງ ເພື່ອຮັບປະກັນໃຫ້ການບໍລິຫານຈັດການການເງິນ-ງົບປະມານຂອງລັດ ມີຄວາມໂປ່ງໃສ, ເຂັ້ມແຂງແລະສ້າງສະຖຽນລະພາບທາງດ້ານເສດຖະກິດມະຫາພາກ, ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ໃຫ້ມີການຂະຫຍາຍຕົວຢ່າງໝັ້ນທ່ຽງແລະມີຄວາມຍືນຍົງ.

# ສປນວ ເຄື່ອນໄຫວວຽກງານຮອບດ້ານ



(ສປນວ) - ໃນວັນທີ 3 ກັນຍາຜ່ານມາຊາວໜຸ່ມປະຊາຊົນປະຕິວັດລາວຮາກຖານສະພາປະຊາຊົນ ນະຄອນຫຼວງວຽງຈັນ ໄດ້ຈັດພິທີປະກາດນາມມະຍົດ 4 ບຸກ ປະຈຳປີ 2024 ທີ່ຫ້ອງວ່າການປົກຄອງ ນະຄອນຫຼວງວຽງຈັນໂດຍການເຂົ້າຮ່ວມຂອງ ສະຫາຍ ນະຄະເສນ ສີຫາລາດ ເລຂາໜ່ວຍພັກຮາກຖານສະພາປະຊາຊົນ ນະຄອນຫຼວງວຽງຈັນ, ມີສະຫາຍ ສີລິວັນ ຫຼຽນວິໄລສັກ ຮອງເລຂາຄະນະບໍລິຫານງານຊາວໜຸ່ມ ປະຊາຊົນ ປະຕິວັດລາວ ນະຄອນຫຼວງວຽງຈັນ, ພ້ອມດ້ວຍແຂກຖືກເຊີນ ແລະ ສະມາຊິກຊາວໜຸ່ມເຂົ້າຮ່ວມ.

ໃນພິທີດັ່ງກ່າວ ສະຫາຍ ນາງ ວຽງສະຫວັນ ວົງສາລີ ເລຂາຄະນະບໍລິຫານງານຊາວໜຸ່ມ ປະຊາຊົນ ປະຕິວັດລາວ ຮາກຖານສະພາປະຊາຊົນ ນະຄອນຫຼວງວຽງຈັນ ໄດ້ລາຍງານການຈັດຕັ້ງປະຕິບັດ ແລະ ການປະເມີນ ກວດກາຂໍ້ແຂ່ງຂັນ 4 ບຸກ ໃນປີ 2024 ຂອງຄະນະຊາວໜຸ່ມ ປປລ ຮາກຖານສະພາປະຊາຊົນ ນະຄອນຫຼວງ ເຊິ່ງເຫັນວ່າໄດ້ວ່າ ສະມາຊິກຊາວໜຸ່ມພາຍໃນໜ່ວຍ ແມ່ນມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ ມີຄວາມເຊື່ອ ໝັ້ນ ແລະ ເປັນເອກະພາບສູງຕໍ່ແນວທາງນະໂຍບາຍຂອງພັກລະບຽບກົດໝາຍຂອງລັດ ເວົ້າລວມ ເວົ້າສະເພາະແມ່ນ ຂອງຄະນະພັກ ຄະນະໜ່ວຍ ແລະ ສະມາຊິກພາຍໃນໜ່ວຍສະແດງອອກໃນຖັນແຖວສະມາຊິກຊາວໜຸ່ມແມ່ນມີຄວາມອຸ່ນອຽນ ທຸ່ນທ່ຽງ ຫ້າວຫັ້ນໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍເປັນເຈົ້າການໃນການປະຕິບັດ ແນວທາງນະໂຍບາຍຂອງພັກ ຮຽນຮູ້ວິທະຍາສາດເຕັກນິກທີ່ທັນສະໄໝເພື່ອນຳໃຊ້ເຂົ້າໃນການປະຕິບັດວຽກງານທີ່ໄດ້ ຮັບມອບໝາຍ ດ້ານການຈັດຕັ້ງແມ່ນໄດ້ຮັບການປັບປຸງ ແລະ ມີຄວາມເຂັ້ມແຂງ ມີແບບແຜນການນຳພາຢ່າງຖືກຕ້ອງ ສອດຄ່ອງເຮັດ ໃຫ້ພາຍໃນໜ່ວຍມີຄວາມສາມັກຄີ ມີຄວາມສະຫງົບ ແລະ ມີຂະບວນການທີ່ພົ້ນເດັ່ນ. ຜ່ານການປະເມີນການເຄື່ອນໄຫວຈັດຕັ້ງປະຕິບັດ ຂໍ້ແຂ່ງຂັນ 4 ບຸກ ເຮັດໃຫ້ສະມາຊິກຊາວໜຸ່ມຈຳນວນຫຼາຍ ໄດ້ຮັບໃບຍ້ອງຍໍ ໃນການຈັດຕັ້ງເຄື່ອນ ໄຫວ 4 ບຸກ ດັ່ງນັ້ນ ຈຶ່ງສາມາດຍັ້ງຢືນ ແລະ ຮັບຮອງເອົາຂອງຄະນະຊາວໜຸ່ມ ປປລ ຮາກຖານສະພາປະຊາຊົນ ນະຄອນຫຼວງວຽງຈັນ ເປັນໜ່ວຍ 4 ບຸກປະຈຳປີ 2024 ຕໍ່ຜົນງານ

ອ່ານຕໍ່ໜ້າ 7

# ປະທານ ສພຂ ຫຼວງນ້ຳທາ ເຂົ້າຮ່ວມງານບຸນຍອດຍິ່ງ ຕາເວັນຕົກສ່ຽງເໜືອ ປີ 2025 ສສ.ຫວຽດນາມ



(ສພຂ) - ທ່ານ ຄຳຟອງ ອິນມານີ ຮອງເລຂາຄະນະບໍລິຫານງານພັກແຂວງ ປະທານສະພາປະຊາຊົນແຂວງຫຼວງນ້ຳທາ ສປປລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມງານບຸນຍອດຍິ່ງຕາເວັນຕົກສ່ຽງເໜືອ ທີ່ໄດ້ຈັດຂຶ້ນຢ່າງຍິ່ງໃຫຍ່ ໃນລະຫວ່າງວັນທີ 19-21 ກັນຍາ 2025 ທີ່ແຂວງດ້ຽນບຽນ ສສ.ຫວຽດນາມ.

ງານບຸນດັ່ງກ່າວ ແມ່ນເຫດການວັດທະນາທຳທາງດ້ານປະຫວັດສາດ ຂອງ 6 ແຂວງພາກເໜືອ ຂອງ ສສ.ຫວຽດນາມ ໂດຍສະເພາະໃນປີ 2025 ນີ້ແມ່ນແຂວງດ້ຽນບຽນ ໄດ້ຮັບກຽດເປັນເຈົ້າພາບແລະເປັນຄັ້ງທຳອິດ ທີ່ຈັດງານດັ່ງກ່າວຂຶ້ນ ໂດຍມີຈຸດປະສົງ ເພື່ອສົ່ງເສີມການທ່ອງທ່ຽວຕິດພັນກັບການອະນຸລັກວັດທະນາທຳແລະການເອກອ້າງເຖິງ ຄວາມອຸດົມສົມບູນທາງດ້ານທຳມະຊາດ, ຄວາມອົງອາດກ້າຫານຂອງປັ້ນຮົບດ້ຽນບຽນຟູ ແລະ ຮີດຄອງປະເພນີອັນດີງາມ, ມໍລະດົກອັນລ້ຳຄ່າຂອງປະຊາຊົນບັນດາເຜົ່າພາຍໃນແຂວງດ້ຽນບຽນ. ໃຫ້ກຽດເຂົ້າຮ່ວມງານບຸນຍອດຍິ່ງຄັ້ງນີ້ ມີທ່ານ ນາງ ຫວໍ ທີ ແອັງ ຊວັນ ກຳມະການສູນກາງພັກ, ຮອງປະທານປະເທດ ແຫ່ງ ສສ.ຫວຽດນາມ, ມີການນຳຂັ້ນສູງຂອງ ສສ.ຫວຽດນາມ, ການນຳບັນ

ອ່ານຕໍ່ໜ້າ 10

# ສສຊ-ສສຂ ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ຄອບຄົວທີ່ໄດ້ຮັບຜົນກະທົບໄພພິບັດ




(ສພຂ) - ວັນທີ 29 ກັນຍາຜ່ານມານີ້, ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 7 ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ 2 ລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຮັດວຽກຢູ່ເມືອງຄອບ ແຂວງໄຊຍະບູລີ ເຊິ່ງນຳໂດຍທ່ານ ບຸນລ້ອນ ຊິມສີຫາປັນຍາ ກຳມະການພັກແຂວງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7, ຮອງປະທານສະພາປະຊາຊົນແຂວງພ້ອມດ້ວຍຄະນະໂດຍໃຫ້ກຽດຕ້ອນຮັບຂອງທ່ານ ໄລ ອິນທິບ ຮອງເລຂາຄະນະບໍລິຫານງານພັກເມືອງ ປະທານຄະນະກຳມະການປົກຄອງເມືອງ ສະມາຊິກສະພາປະຊາຊົນແຂວງຊຸດທີ 2 ປະຈຳເຂດເລືອກຕັ້ງເມືອງຄອບ ພ້ອມດ້ວຍຄະນະຕະຫຼອດຜູ້ມີສິດເລືອກຕັ້ງເຂົ້າຮ່ວມ.

ໃນພິທີທ່ານ ສະໝັກ ລິດສະຖານ ກຳມະການປະຈຳພັກເມືອງ, ຮອງປະທານຄະນະກຳມະການປົກຄອງເມືອງ ໃຫ້ກຽດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 9 ເດືອນທີ່ຜ່ານມາ ຊຶ່ງທ່ານໃຫ້ຮູ້ວ່າ: ຕະຫຼອດໄລຍະ 9 ເດືອນຜ່ານມາ ເຖິງວ່າເມືອງພວກເຮົາຍັງໄດ້ຮັບຜົນກະທົບຈາກ ບັນຫາຄວາມຫຍຸ້ງຍາກເສດຖະກິດການເງິນ, ຄວາມບໍ່ສະຫງົບພາຍໃນຂອບເຂດໃກ້ຄຽງ, ໄພພິບັດທຳມະຊາດຍັງເກີດຂຶ້ນຢ່າງຕໍ່ເນື່ອງ ແຕ່ພາຍໃຕ້ການນຳພາ-ຊີ້ນຳຂອງອົງຄະນະພັກເມືອງ, ຄວາມເປັນເຈົ້າການຂອງຂະແໜງການ, ການປະກອບສ່ວນຂອງບັນດາຫົວໜ່ວຍການຜະລິດ-ທຸລະກິດ ແລະ ຄວາມສູ້ຊົນບຸກບືນຂອງປະຊາຊົນບັນດາເຜົ່າໄດ້ເຮັດໃຫ້ເສດຖະກິດ ໂດຍລວມຂອງເມືອງຍັງສືບຕໍ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ບັນດາຄາດໝາຍສູ້ຊົນຕ່າງໆທີ່ເມືອງໄດ້ກຳນົດໄວ້ໄດ້ຮັບການຈັດຕັ້ງປະຕິບັດ ໂດຍລວມເສດຖະກິດມະຫາພາກຂອງເມືອງຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ເຊິ່ງສະແດງອອກເກັບລາຍຮັບເຂົ້າງົບປະມານໄດ້ທັງໝົດ 2,79 ຕື້ກີບ ເທົ່າກັບ 96,87% ຂອງແຜນການປີ, ປະຕິບັດລາຍຈ່າຍໄດ້ 78,31% ຂອງແຜນການປີ; ຕິດຕາມການເຄື່ອນຍ້າຍສິນຄ້າພາຍໃນ 1,23 ລ້ານໂດລາ ເທົ່າກັບ 71% ຂອງແຜນການ; ສົ່ງອອກໄປຕ່າງປະເທດ 1,39 ລ້ານໂດລາ ເທົ່າກັບ 42,71% ຂອງແຜນ ການປີ ແລະ ນຳເຂົ້າສິນຄ້າ 172.387 ໂດລາສະຫະລັດ ທຽບໃສ່ແຜນການປີປະຕິບັດໄດ້ 175%. ພ້ອມດຽວກັນນີ້ຍັງໄດ້ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດໂຄງການລົງທຶນຢູ່ພາຍໃນເມືອງທັງໝົດ 37 ໂຄງການ ມູນຄ່າ 130,51 ຕື້ກີບ: ໂຄງການລົງທຶນຂອງລັດ 10

ອ່ານຕໍ່ໜ້າ 12

# ສພຂ ບໍ່ແກ້ວ ຈັດຕັ້ງໂຄສະນາ-ປາຖະກະຖາ ວັນສ້າງຕັ້ງສະຫະພັນນັກຮົບເກົ່າລາວ




(ສພຂ) - ວັນທີ 9 ກັນຍາ ທີ່ ຫ້ອງປະຊຸມສະພາປະຊາຊົນແຂວງບໍ່ແກ້ວ (ສພຂ) ໄດ້ຈັດຕັ້ງໂຄສະນາ-ປາຖະກະຖາ ວັນສ້າງຕັ້ງສະຫະພັນນັກຮົບເກົ່າແຫ່ງຊາດລາວ ຄົບຮອບ 23 ປີ (9 ກັນຍາ2002-9ກັນຍາ2025) ໂດຍການເປັນປະທານຂອງທ່ານ ພົອ ທຸມແພງ ອິນທະຈັກ ເລຂາໜ່ວຍພັກ, ຮອງປະທານສະພາປະຊາຊົນແຂວງບໍ່ແກ້ວ, ເຂົ້າຮ່ວມມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດ ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນພິທີ, ໄດ້ຮັບຟັງການເຜີຍແຜ່ເອກະສານກ່ຽວກັບວັນສ້າງຕັ້ງສະຫະພັນນັກຮົບເກົ່າແຫ່ງຊາດລາວ ຄົບຮອບ 23 ປີ (9/92002-9/92025) ພ້ອມຍົກໃຫ້ເຫັນເຖິງມູນເຊື້ອ ແລະ ຜົນງານອັນໃຫຍ່ຫຼວງຂອງຖັນແຖວ ນັກຮົບເກົ່າ ການຕໍ່ສູ້ເພື່ອກອບກູ້ເອົາຄວາມເປັນເອກະລາດ, ອຳນາດອະທິປະໄຕ, ການປົກປັກຮັກສາ ແລະ ພັດທະນາປະເທດຊາດພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ; ປະຫວັດການກຳເນີດແລະພາລະບົດບາດ, ໜ້າທີ່ຂອງອົງການສະຫະພັນນັກຮົບເກົ່າແຫ່ງຊາດລາວ; ຜົນງານການເຄື່ອນໄຫວຂອງສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ທິດທາງໜ້າ ທີ່ອັນໃໝ່ທີ່ຈະປະຕິບັດໃນຕໍ່ໜ້າ; ຈາກນັ້ນ, ທ່ານຍັງໄດ້ສືບຕໍ່ ເຜີຍແຜ່ເອກະສານກ່ຽວກັບຜົນງານການເຄື່ອນໄຫວ ຂອງສະຫະພັນນັກຮົບເກົ່າຂອງແຂວງບໍ່ແກ້ວ ຕະຫຼອດໄລຍະ 23 ປີ ມີຫຼາຍຢ່າງທີ່ພົ້ນເດັ່ນ ເປັນຕົ້ນ: ການໂຄສະນາອົບຮົມໃຫ້ມວນຊົນເຂົ້າໃຈທາດແທ້ມູນເຊື້ອການປະຕິວັດຂອງສະຫະພັນນັກຮົບເກົ່າ ແລະ ປຸກລະດົມຂະບວນການແຂ່ງຂັນ 3 ດີ 6 ຮັກສາ, ຜົນປະໂຫຍດກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຂອງສະຫະພັນນັກຮົບເກົ່າ ຕິດພັນກັບການແຂ່ງຂັນຮັກຊາດສ້າງບ້ານພັດທະນາ, ຊຸກຍູ້ວຽກງານ 3 ສ້າງໃຫ້ມີຄຸນນະພາບແລະເປັນຮູບປະທຳຍິ່ງຂຶ້ນ.

ໃນຕອນທ້າຍ ທ່ານປະທານ ໄດ້ມີຄຳເຫັນເນັ້ນໜັກໃຫ້ສະມາຊິກພັກ, ພະນັກງານ-ລັດ

ອ່ານຕໍ່ໜ້າ 11




# ລັດຖະສາດໃນຊີວິດປະຈຳວັນ

**# ດົ້ນກິບເມກ**

ບົດກ່ອນຜູ້ຂຽນໄດ້ອະທິບາຍປູພື້ນຖານໄວ້ແລ້ວວ່າ ລັດຖະສາດມັນກວມເອົາການບໍລິຫານປົ່ນອ້ອມຊີວິດຄົນເຮົາ ທັງວຽກງານການຈັດຕັ້ງໃນສຳນັກງານ-ອົງການ ແລະ ຊີວິດຄອບຄົວ ຍ່ອມຕ້ອງໄດ້ເຮັດໜ້າທີ່ບໍລິຫານ-ຄຸ້ມຄອງ ໃຫ້ຖືກຕ້ອງເໝາະສົມ ບໍ່ດັ່ງນັ້ນຈະໄດ້ຜົນຕອບຮັບຕໍ່າທີ່ຂາດຄຸນນະພາບ ຍົກຕົວຢ່າງ: ສຳລັບຄອບຄົວ ຖ້າວ່າພໍ່ແມ່ປະພຶດຕົນດີ-ຖືກຕ້ອງເໝາະສົມ, ເປັນທີ່ເຄົາລົບສັດທາຂອງລູກຫຼານ ເວລາເວົ້າສອນ ເຂົາກໍເຊື່ອຖືເຮັດຕາມ; ແຕ່ຖ້າພໍ່ແມ່ຜູ້ປົກຄອງຂາດຫຼັກສິນທຳ, ປະພຶດຕົນບໍ່ໜ້າເຊື່ອຖື ເວລາຈະສອນລູກຫຼານ ເຂົາກໍບໍ່ຢາກເຮັດຕາມ ເພາະວ່າຕົນເອງບໍ່ເປັນແບບຢ່າງ.

ລັດຖະສາດຢູ່ໃນຊີວິດປະຈຳວັນ ມັນຈຶ່ງກ່ຽວຂ້ອງຕັ້ງແຕ່ຊີວິດຄອບຄົວກ້າວໄປຫາການບໍລິຫານສູງສຸດ ເຊິ່ງຈະມີລາຍລະອຽດຕ່າງກັນຕາມພາລະບົດບາດ ຍົກຕົວຢ່າງ: ສະຖາບັນການສຶກສາແຫ່ງໜຶ່ງ ມີຄະນະອຳນວຍການ-ຄູອາຈານທີ່ເປັນພະນັກງານສິດສອນ ເຮັດໜ້າທີ່ຖ່າຍທອດຄວາມຮູ້ ຖ້າວ່າຄະນະອຳນວຍການໃນຖານະຜູ້ບໍລິຫານການສຶກສາ ຫາກມີວິທີການປົກຄອງ ແລະ ບໍລິຫານ ບໍ່ເປັນໄປຕາມຫຼັກການ-ລະບຽບການ, ຄິດເອົາໃຈໃສ່ແຕ່ຜົນປະໂຫຍດຕົນເອງ, ລູກນ້ອງເອົາໃຈໄດ້ກິນໄດ້ດື່ມແລ້ວ ຍ້ອງຍໍຕັດສິນໃຫ້ຜູ້ນັ້ນໂລດ, ຜົນໜ້າວຽກຍາວນານ ກໍຈະພາໃຫ້ບໍລິວານທັງຫຼາຍເສື່ອມສັດທາ ເພາະຫົວໜ້າບໍ່ເຮັດຕາມຫຼັກການ ແຕ່ເຮັດຕາມຖືກໃຈ, ເວລາປະຊຸມຈະເວົ້າສັ່ງ ເຂົາກໍບໍ່ຢາກເຮັດຕາມ; ຢ່າລືມວ່າການບໍລິຫານຄົນ, ການປົກຄອງຄົນມັນບໍ່ຄືບໍລິຫານວຽກ ເພາະຄົນມັນຮູ້ເຫັນຄິດເປັນ, ມີກະຕິກາທີ່ສ່ວນລວມຍອມຮັບກັນພວກເຂົາກໍໝົດສັດທາ.

ການຄຸ້ມຄອງບໍລິຫານຄົນ, ຜູ້ເປັນຫົວໜ້າຈຶ່ງຕ້ອງຍຶດຫຼັກການສອດສ່ອງ ເບິ່ງແຍງໃຫ້ທົ່ວເຖິງ, ຖ້າເຮັດບໍ່ໄດ້ ສະແດງວ່າຂາດສະພາວະຜູ້ນຳ ຂາດປັນຍາທີ່ຈະບໍລິຫານຄຸ້ມຄອງຄົນ; ສິ່ງສຳຄັນຢ່າຄິດເອົາລະບຽບການໄປຂົ່ມຂູ່ເຂົາ ແຕ່ຈົ່ງເອົາຄຸນນະທຳນຳທາງໃຫ້ທຸກຝ່າຍໄດ້ຮັບຄວາມຍຸຕິທຳ, ວຽກລວມກໍຈະສຳເລັດ! ສະເໜີເປັນຂໍ້ຄິດ.

## ສປນວ...

(ຕໍ່ຈາກໜ້າ 1)

ດັ່ງກ່າວຈຶ່ງໄດ້ມອບໃບຍ້ອງຍໍໃຫ້ສະມາຊິກຊາວໜຸ່ມທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ໃນໄລຍະຜ່ານມາ.

ວັນທີ 18 ກັນຍາ ຜ່ານມາ, ທ່ານ ນາງ ລຳພອຍ ສີອັກຄະຈັນກຳມະການປະຈຳພັກນວ, ຮອງປະທານ ສະພາປະຊາຊົນ ນວ ໄດ້ເຂົ້າຮ່ວມ ເປັນຄະນະປະທານ ໃນກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາ ປະຈຳສົກຮຽນ 2024-2025 ຂັ້ນນະຄອນຫຼວງວຽງຈັນ ທີ່ສະໂມສອນ ມສ ນາຊາຍທອງ, ເຊິ່ງມີບັນດາທ່ານ ຫົວໜ້າ-ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ນວ, ທ່ານ ນາງເກດມະນີບັນດາສັກ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ບັນດາທ່ານຮອງປະທານຄະນະກຳມະການປົກຄອງເມືອງ, ບັນດາຜູ້ບໍລິຫານການສຶກສາທົ່ວ ນວ ພ້ອມດ້ວຍແຂກຖືກເຊີນເຂົ້າຮ່ວມ.

ໃນໂອກາດນີ້ ທ່ານນາງ ລຳພອຍ ສີອັກຄະຈັນ ໄດ້ຕາງໜ້າການນຳ ນວ ຂຶ້ນມອບໂລ້ ແລະໃບຍ້ອງຍໍ ໃຫ້ແກ່ໂຮງຮຽນຂຽວສະອາດແລະສິ່ງແວດລ້ອມດີ; ໃບຍ້ອງຍໍໂຮງຮຽນຕົວແບບຄຸນນະພາບແລະໃບຍ້ອງຍໍ ໂຮງຮຽນ 3 ດາວ ໃຫ້ແກ່ບັນດາໂຮງຮຽນຕ່າງໆທີ່ປະຕິບັດໄດ້ຕາມມາດຖານເງື່ອນໄຂທີ່ໄດ້ກຳນົດ.

ໃນຕອນທ້າຍ, ທ່ານຍັງໄດ້ໂອ້ລົມ ພ້ອມທັງຍ້ອງຍໍຊົມເຊີຍຜົນສຳເລັດການເຄື່ອນໄຫວວຽກງານຂອງພະແນກ ກໍຄືບັນດາສະຖາບັນການສຶກສາທົ່ວ ນວ ທີ່ຍາດມາໄດ້ ພາຍໃຕ້ການຊີ້ນຳ-ນຳພາ ຂອງການນຳພະແນກ, ການນຳເມືອງ. ພ້ອມທັງຮຽກຮ້ອງ ໃຫ້ຜູ້ບໍລິຫານການສຶກສາທຸກຂັ້ນ ສືບຕໍ່ຮັກສາມູນເຊື້ອຂອງຕົນ, ເອົາໃຈໃສ່ຄົ້ນຄວ້າຫຼັກສູດການຮຽນ-ການສອນ ເພື່ອປະຕິບັດຕາມຫຼັກສູດຢ່າງເຄັ່ງຄັດ; ກວດກາຄືນສິ່ງຫຍໍ້ທໍ້ຕໍ່ຄູອາຈານ, ນ້ອງນັກຮຽນ ເພື່ອປຶກສາຫາລືແລະ ຫາວິທີທາງແກ້ໄຂ; ເອົາໃຈໃສ່ວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ເປັນປົກກະຕິ ແລະຕໍ່ເນື່ອງ ເຮັດໃຫ້ໂຮງຮຽນແລະຄຸນນະພາບການຮຽນນັບມື້ນັບສູງຂຶ້ນ.

ຕອນເຊົ້າ, ວັນທີ 23 ກັນຍາຜ່ານມາ ໜ່ວຍພັກຮາກຖານສະພາປະຊາຊົນ ນະຄອນຫຼວງວຽງຈັນນຳພາໂດຍສະຫາຍນະຄະເສນ ສີຫາລາດ, ເລຂາໜ່ວຍພັກຮາກຖານ, ຄະນະປະຈຳສະພາປະຊາຊົນ ນວ, ມີບັນດາສະຫາຍ ຮອງ ເລຂາ, ກຳມະການໜ່ວຍພັກ, ບັນດາຜູ້ແທນສົມບູນຂອງໜ່ວຍພັກຮາກຖານ, ບັນດາທ່ານຄະນະປະຈຳສະພາປະຊາຊົນແລະບັນດາສະມາຊິກພັກ ພາຍໃນໜ່ວຍພັກຮາກຖານສະພາປະຊາຊົນ ນວ ໄດ້ເຂົ້າຮ່ວມພິທີວາງກະຕ່າດອກໄມ້ ຄາລະວະບູຊາຮູບປັ້ນທູ່ ປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກ ຂອງປວງຊົນລາວທັງຊາດ ເພື່ອຂໍານັບ ຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກນະຄອນຫຼວງວຽງຈັນຄັ້ງທີVIII ແລະເພື່ອສະແດງຄວາມເຄົາລົບຮັກ, ຮູ້ບຸນຄຸນ ແລະ ລະນຶກເຖິງຜົນງານອັນໃຫຍ່ຫຼວງຂອງ ປະທານ ໄກສອນ ພົມວິຫານ ທີ່ໄດ້ອຸທິດຕະຫຼອດຊີວິດເພື່ອພາລະກິດຕໍ່ສູ້ຍາດເອົາເອກະລາດ, ອິດສະຫຼະພາບມາໃຫ້ປະຊາຊົນລາວ ບັນດາເຜົ່າ, ເຊິ່ງໄດ້ສ້າງການຫັນປ່ຽນໃໝ່ຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານໃນລະບົບອຳນາດ ແຫ່ງລັດໃຫ້ມີປະສິດທິຜົນສູງ, ສ້າງບາດລ້ຽວໃໝ່ໃຫ້ແກ່ການ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.



## ກຳມະທິການ ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມຄົບຄະນະກຳມາທິການບັນດາເຜົ່າ (ກບຜ) ປະຈຳປີ 2025 ໄດ້ໄຂຂຶ້ນຢ່າງເປັນທາງການເມື່ອວັນທີ 14-15 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ພາຍໃຕ້ການເປັນປະທານຂອງທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ ໂດຍມີທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມ ແລະ ມີຄຳເຫັນໂອ້ລົມ; ມີບັນດາທ່ານໃນຄະນະປະຈຳສະພາແຫ່ງຊາດ, ຮອງປະທານກຳມາທິການ, ກຳມະການຂອງ ກບຜ ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ຕາງໜ້າຈາກກະຊວງ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມດ້ວຍແຂກຖືກເຊີນ ເຂົ້າຮ່ວມ.

ທ່ານ ຄຳຈັນ ໂສຕາປະເສີດ ໃຫ້ຮູ້ວ່າ: ກອງປະຊຸມຄົບຄະນະປະຈຳປີຄັ້ງນີ້ເປັນກອງປະຊຸມທ້າຍສະໄໝຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງຈັດຂຶ້ນໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດພວມຂຸ້ນຂຽວກະກຽມກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ແລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX, ກະກຽມດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີ V ພ້ອມທັງສະເຫຼີມສະຫຼອງວັນສະຖາປະນາ ສປປລາວ ແລະ ວັນສ້າງຕັ້ງສະພາແຫ່ງຊາດ ຄົບຮອບ 50 ປີ. ຈຸດປະສົງຕົ້ນຕໍແມ່ນເພື່ອຮັບຟັງການລາຍງານ, ປະກອບຄຳເຫັນ ແລະ ຮັບຮອງເອົາການສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2025 ແລະ ທິດທາງແຜນການເຄື່ອນໄຫວປີ 2026, ບົດສະຫຼຸບຜົນງານ 5 ປີ (2021-2025) ແລະ ທິດທາງແຜນການ 5 ປີ (2026-2030)ຂອງກຳມາທິການລວມເຖິງບັນດາເນື້ອໃນສຳຄັນຕ່າງໆ ເຊັ່ນ: ບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2025 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2026 ຂອງກຳມາທິການວັດທະນະທຳ-ສັງຄົມ, ບັນດາເຜົ່າແລະສາສະໜາ; ບົດສະຫຼຸບຜົນງານການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງກຳມາທິການ; ບົດລາຍງານຫຍໍ້ຜົນການຕິດຕາມກວດກາການຈັດຕັ້ງປະຕິບັດດຳລັດ 315/ລບ ວ່າດ້ວຍການຄຸ້ມຄອງ ແລະການປົກປ້ອງການເຄື່ອນໄຫວສາສະໜາ ປະຈຳປີ 2025 ຂອງກຳມາທິການບັນດາເຜົ່າ; ບົດລາຍງານໂດຍສັງລວມຜົນການຕິດຕາມກວດກາກ່ຽວກັບຜົນກະທົບກວ້າງຈາກໂຄງການພັດທະນາຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ສິ່ງແວດລ້ອມ ພ້ອມດ້ວຍການປະກອບຄຳເຫັນຂອງກຳມະການຂອງ ກບຜ ຈາກແຂວງຜົ້ງສາລີ, ຫົວພັນ, ຊຽງຂວາງ, ອັດຕະປື; ບົດລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 135/ສພຊ, ລົງວັນທີ 11 ທັນວາ2024ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ພ້ອມດ້ວຍການປະກອບຄຳເຫັນຂອງກຳມະການຂອງ ກບຜ ຈາກແຂວງຫຼວງນ້ຳທາ, ບໍລິຄຳໄຊ, ສະຫວັນນະເຂດ ແລະນະຄອນຫຼວງວຽງຈັນ; ຮ່າງບົດປະກອບຄຳເຫັນຂອງສູນກາງແນວລາວສ້າງຊາດກ່ຽວກັບຜົນການຕິດຕາມກວດກາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດໃນໄລຍະຜ່ານມາ; ບົດຕີລາຄາໂດຍສັງລວມຜົນການຈັດຕັ້ງປະຕິບັດນິຕິກຳກ່ຽວກັບກົນໄກການປະສານງານລະຫວ່າງກຳມາທິການບັນດາເຜົ່າ ກັບ ສູນກາງແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ; ລາຍງານການເຄື່ອນໄຫວວຽກງານການຄຸ້ມຄອງອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO) ຂອງກະຊວງການຕ່າງປະເທດ; ຮ່າງມະຕິກອງປະຊຸມຄົບຄະນະກຳມາທິການບັນດາເຜົ່າ ປະຈຳປີ 2025.

ຜູ້ແທນກອງປະຊຸມ ໄດ້ພ້ອມກັນເຊີດຊູຄວາມຄວາມຮັບຜິດຊອບ ແລະ ສຸມສະຕິປັນຍາ, ຄວາມຮູ້ຄວາມສາມາດໃນການຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາເພື່ອເປັນພື້ນຖານໃນການນຳໄປຄົ້ນຄວ້າ, ປຶກສາຫາລືແລະປັບປຸງບັນດາເອກະສານ ໃຫ້ມີເນື້ອໃນທີ່ຄົບຖ້ວນ, ຖືກຕ້ອງ, ສອດຄ່ອງແລະສົມບູນສາມາດຮັບຮອງ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

ໂອກາດນີ້, ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ຕີລາຄາສູງຕໍ່ຜົນສຳເລັດທີ່ກຳມາທິການບັນດາເຜົ່າ ຍາດມາໄດ້ຕະຫຼອດໄລຍະເວລາເກືອບ 5 ປີຜ່ານມາ ທັງເນັ້ນໜັກໃຫ້ເພີ່ມທະວີການປະຕິບັດພາລະບົດບາດເປັນຕົວແທນຂອງປະຊາຊົນ ໃຫ້ເລິກເຊິ່ງກວ່າເກົ່າ, ຍົກສູງປະສິດທິຜົນຂອງການຕິດຕາມການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ, ຍົກສູງຄຸນນະພາບວຽກງານດ້ານນິຕິບັນຍັດ ໃຫ້ທັນກັບການປ່ຽນແປງຂອງຍຸກສະໄໝ ແລະ ເສີມຂະຫຍາຍພາລະບົດບາດໃນການພິຈາລະນາ ແລະ ຕັດສິນບັນຫາສຳຄັນຂອງຊາດ ໂດຍອີງໃສ່ຂໍ້ມູນ ແລະ ຜົນປະໂຫຍດຂອງປະຊາຊົນເປັນໃຈກາງ.





ສຸກສະບາຍຫາຍໂຣຄ

# ປະໂຫຍດ ແລະ ຂໍ້ຄວນລະວັງ ຂອງໝາກເລັ່ນ

# ຮຽບຮຽງໂດຍ: ທິວກະທິ

**1. ດີຕໍ່ສຸຂະພາບຜິວ**

ໝາກເລັ່ນອຸດົມໄປດ້ວຍວິຕາມິນຊີ ທີ່ຊ່ວຍຮັກສາສຸຂະພາບຜິວໃຫ້ດີຂຶ້ນ ອີງຕາມການຄົ້ນຄວ້າທີ່ຕີພິມໃນວາລະສານ Nutrients ໃນ 2017 ໃນຫົວຂໍ້ວິຕາມິນຊີມີບົດບາດຕໍ່ສຸຂະພາບຜິວແນວໃດ? ພົບວ່າວິຕາມິນຊີມີບົດບາດສຳຄັນໃນການສ້າງຄໍລະເຈນ, ທາດໂປຣຕີນຊະນິດໜຶ່ງທີ່ມີບົດບາດສຳຄັນໃນການເສີມສ້າງສຸຂະພາບຂອງຜິວ ຊ່ວຍໃຫ້ຜິວຮັກສາຄວາມຍືດຫຍຸ່ນ ແລະ ອາດຈະຊ່ວຍປ້ອງກັນຫອຍຫ່ຽວກ່ອນໄວອັນຄວນ; ນອກຈາກນີ້, ໝາກເລັ່ນຍັງມີສານໄລໂຄປິນ ເຊິ່ງແມ່ນສານຕ້ານອະນຸມູນອິດສະຫຼະທີ່ຊ່ວຍປົກປ້ອງຜິວຈາກລັງສີຢູວີໃນແສງແດດ.



**2. ຫຼຸດຜ່ອນຄວາມສ່ຽງຂອງພະຍາດຫົວໃຈ**

ສານຕ້ານອະນຸມູນອິດສະຫຼະຕ່າງໆເຊັ່ນໄລໂຄປິນແລະວິຕາມິນຊີຊ່ວຍຫຼຸດຄວາມສ່ຽງຂອງພະຍາດຫົວໃຈແລະຫຼອດເລືອດໄດ້ຈາກບົດລາຍງານທົບທວນການວິໄຈ ທີ່ສຶກສາກ່ຽວກັບຄວາມສຳພັນຂອງໝາກເລັ່ນ ແລະສຸຂະພາບຂອງຫົວໃຈແລະຫຼອດເລືອດ ໃນປີ 2003 ທີ່ຕີພິມໃນວາລະສານ Critical Reviews in Food Science and Nutrition ພົບວ່າສານຕ້ານອະນຸມູນອິດສະຫຼະເຫຼົ່ານີ້ຈະຊ່ວຍປົກປ້ອງເສັ້ນເລືອດຫົວໃຈຈາກການຫຼູ້ຍຫ້ຽນທີ່ນຳໄປສູ່ການເຊື່ອມສະພາບຂອງເຊວ.

ໝາກເລັ່ນຍັງມີໂພແທດຊຽມທີ່ອາດຈະຊ່ວຍຫຼຸດຜ່ອນປະລິມານຂອງຄໍເລດເຕີຣໍທີ່ບໍ່ດີ, ຊ່ວຍຄວບຄຸມການເຕັ້ນຂອງຫົວໃຈປົກກະຕິ ແລະ ອາດຈະຊ່ວຍຫຼຸດຄວາມດັນເລືອດສູງໄດ້ເຊິ່ງເປັນປັດໄຈສ່ຽງທີ່ສຳຄັນຂອງພະຍາດຫົວໃຈ ແລະ ຫຼອດເລືອດ ນຳອີກ.

**3.ຊ່ວຍປ້ອງກັນມະເຮັງ**

ໄລໂຄປິນ ພົບເຫັນຢູ່ໃນໝາກເລັ່ນ ມີສ່ວນຊ່ວຍປ້ອງກັນມະເຮັງຕ່ອມອັນທະອີງຕາມການສຶກສາກ່ຽວກັບປະສິດທິພາບຂອງໄລໂຄປິນໃນການສະກັດກັ້ນມະເຮັງຕ່ອມອັນທະການສຶກສາທີ່ຕີພິມໃນວາລະສານ Biomedicine & Pharmacotherapy ໃນປີ 2020 ພົບວ່າ ໄລໂຄປິນສາມາດຊ່ວຍຍັບຍັ້ງການຈະເລີນເຕີບໂຕ ແລະ ການຂະຫຍາຍຕົວຂອງເຊວມະເຮັງຕ່ອມອັນທະ ແລະ ຊ່ວຍກະຕຸ້ນໃຫ້ລູ້ລັງມະເຮັງຕ່ອມອັນທະຕາຍໄວຂຶ້ນ; ດັ່ງນັ້ນ, ມັນອາດຈະເປັນປະໂຫຍດຕໍ່ການປິ່ນປົວຫຼືປ້ອງກັນມະເຮັງຕ່ອມລູກໝາກໄດ້ ແຕ່ແນວໃດກໍຕາມຕ້ອງມີການສຶກສາຕື່ມອີກ ເພື່ອກຳນົດປະສິດທິພາບທີ່ຈະແຈ້ງຊັດເຈນ ວ່າການກິນໝາກເລັ່ນເພື່ອປ້ອງກັນມະເຮັງຕ່ອມລູກໝາກ ຫຼື ມະເຮັງອື່ນໆ.

**- ຂໍ້ຄວນລະວັງ:**

ໝາກເລັ່ນໂດຍສະເພາະແມ່ນໝາກເລັ່ນສົດ ພວກມັນອາດຈະປົນເປື້ອນດ້ວຍສານເຄມີ ແລະ ຢາຂ້າແມງໄມ້ ສະນັ້ນ, ຄວນເລືອກຊື້ຈາກແຫຼ່ງທີ່ໄວ້ໃຈໄດ້ ແລະ ຄວນລ້າງໃຫ້ສະອາດທຸກຄັ້ງກ່ອນຮັບປະທານ; ນອກນີ້, ຍັງຄວນຫຼີກລ່ຽງການກິນໃບໝາກເລັ່ນ ເນື່ອງຈາກມັນເປັນພິດຕໍ່ຮ່າງກາຍ ອາດຈະເຮັດໃຫ້ເກີດອາການຕ່າງໆເຊັ່ນ:ຖອກທ້ອງ, ຮາກ, ປາກ ແລະ ຄໍລະຄາຍເຄືອງ, ເຈັບຫົວ, ວິນຫົວ ຖ້າຮ້າຍແຮງອາດຈະເຮັດໃຫ້ເສຍຊີວິດໄດ້ ຖ້າກິນໃນປະລິມານຫຼາຍ.

ຄົນເຈັບທີ່ເປັນພະຍາດໝາກໄຂ່ຫຼັງຄວນລະມັດລະວັງເນື່ອງຈາກໝາກເລັ່ນມີໂພແທດຊຽມຫຼາຍ ອາດສົ່ງຜົນໃຫ້ຫົວໃຈເຕັ້ນບໍ່ສະໝ່ຳສະເໝີ ແລະ ອາດເຮັດໃຫ້ຫົວໃຈວາຍໄດ້.

ແມ່ຍິງຖືພາ ແລະ ໃຫ້ນົມລູກ ບໍ່ມີການສຶກສາທີ່ສະແດງໃຫ້ເຫັນເຖິງອັນຕະລາຍຂອງການກິນໝາກເລັ່ນໃນແມ່ຍິງຖືພາ ແລະ ໃຫ້ນົມລູກ ແຕ່ແນວໃດກໍຕາມ ຄວນກິນໃນປະລິມານທີ່ພໍດີ ແລະ ກິນອາຫານໃຫ້ຄົບ 5 ໝູ່ ເພື່ອຮັບປະກັນວ່າຮ່າງກາຍໄດ້ຮັບສານອາຫານທີ່ສົມບູນ.

www.sanook.com




# ຫ່ອງສາວນັກຮຽນ

# ອານົງເດດ ສິງດາລັກ

✻ ກະວີຂຽນສິ່ງໃຫ້
ເຫັນບັນຫາສັງຄົມ
ຊ່າງຜັນແປດຽວນີ້
ນັກຮຽນບາງຜ່ອງນັ້ນ

ລອງອ່ານພິຈາລະນາ
ຫ່ອງໃຍນຳແທ້
ຫຼາຍປີເປັນຕ່າງ
ແປປິ່ນປ່ຽນໄປ ແທ້ນາ!

✻ ອາຍຸເລີຍລ່ວງເຂົ້າ
ໂສມໜ້າແວວວາວສີ
ລິງສີຕາແຖມຄິ້ວ
ບໍ່ສົນນຳຄຳແມ່ເວົ້າ

ສິບສີ່ພໍດີ
ແຕ່ງເຕີມເສີມແຕ້ມ
ຍາມໄປຮຽນຮ່ຳ
ຈາຕ້ານຕອບຄືນ

✻ ບໍ່ບຸກບືນຕໍ່ຕັ້ງ
ທຽວຊອກຫາເມົາມົວ
ບາງຜ່ອງລົມລອງເຫຼົ້າ
ຕຳລາຮຽນແກວ່ງໄວ້

ຈັບອ່ານຕຳລາ
ບ່ອນຊຸມແຊວຫຼິ້ນ
ມຶນເມົາໝົດທ່າ
ໃນຫ້ອງບ່ອນນອນ

✻ ຍາມຄູສອນສັ່ງຊີ້
ແຕ່ບໍ່ປັບປຸງແປງ
ບົດຮຽນຄູສອນໃຫ້
ອອນໄລນ໌ເປັນແມ່ເຄົ້າ

ຈານຕອບຂານຮັບ
ຮ່ຳຮຽນສຶກສາຮູ້
ວິຊາດີມີຈິດຈ່າຍ
ຕົວເຈົ້າຊ່າງເປັນ ແພງເອີຍ!

✻ ລາງຜ່ອງເອົາແຕ່ຫຼິ້ນ
ພໍ່ແມ່ຂາຍແຮງງານ
ລູກພັດເອົາໄປໃຊ້
ກາຍໃຈແມ່ອ່ອນລ້າ

ທຽວທ່ອງມອງຊາຍ
ສິ່ງບຸດຮຽນຮູ້
ແນວພານສູນຄ່າ
ບຸດຕານ້ອຍບໍ່ຄຳນຶງ ໜ່າຍເດ!

✻ ປ່ຽນປັບໃຈເຖີດນ້ອງ
ຢ່າໄດ້ຫຼົງແສງສີ
ມັນຊິພານິງນ້ອງ
ຄວາມຫວັງເຄີຍວາດໄວ້

ນວນນາດນາລີ
ຮຸ່ງວິໄລໃສຈ້າ
ລິງຊຸມເຫວໃຫຍ່
ຊິຫາຍຈ້ອຍດັ່ງລົມ ນັ້ນນາ!

✻ ແປປ່ຽນໃຈເຖີດຫຼ້າ
ຫັນໃສ່ການສຶກສາ
ຢ່າໄດ້ເປັນສາວນ້ອຍ
ໃຫ້ເປັນຄົນເກັ່ງກ້າ

ອວນອຸ່ນດວງຕາ
ຝຶກຝົນຕົນກ້າວ
ນັກຮຽນມໍສູນຄ່າ
ວິຊາຮູ້ຄູ່ກາຍ ຊອບແລ້ວ!



# ຟ້າຊາຍ ລະບາຍ

(ເລື່ອງເບົາໆ ເອົ້າແນບກັບເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

✻ **ອັບ**ອອກພັນສາປະອໍລະບາຜ່ານພົ້ນ ຫຼາຍຄົນກໍກະກຽມຈິດກຽມໃຈ ທັງກຽມເງິນໄວ້ໃສ່ຊອງຕາມລະດູການ ທັງກຽມງານບາສີ ແຕ່ງແປງເອົາໄພ້ ກຽມໃຈເອົາເຂີຍພ້ອມ ຈັດງານດອງພິທີແຕ່ງ ສາມສີ່ບັດຈິ່ງລົ້ນ ອອມເງິນໄວ້ໃສ່ແຕ່ຊອງ ພີ່ນ້ອງເອີຍ!

✻ **ອັບ**ເວລາປ່ຽນແປງ ລະດູການປ່ຽນໄປ ຈາກປາຍຝົນສູ່ຕົ້ນລະດູໜາວ ຂໍໃຫ້ຊາວພີ່ນ້ອງ ເອົາໃຈໃສ່ດູແລບົວລະບັດຮັກສາ ເບິ່ງແຍງສຸຂະພາບ ເພາະເປັນຊັບສົມບັດສ່ວນຕົວ ຕ້ອງຮັກສາເອົາໃຈໃສ່ ບໍ່ໃຫ້ເຈັບປ່ອຍເປ້ຍເພນລ້ວປ່ຽນບໍ່ມີໃດເດີ!

# ຊອບຍິ້ມ

# ພົ້ງຄຶ໋ງ

## ເລື່ອງ: ຄະແນນເສັງ

ສົມສີ ຫຼັງຈາກທີ່ເລີກອຽກມາຮອດເຮືອນ, ຜູ້ເປັນເມຍກໍເອົານ້ຳມາໃຫ້ດື່ມ ລູກກໍເກັບເຄື່ອງທີ່ຈັບມາໄປມ້ຽນ; ຈາກນັ້ນ, ລູກກໍເອົາໃບຄະແນນເສັງມາໃຫ້ສົມສີເບິ່ງ ພົບປາກົດວ່າເສັງຕົກດ້ອຍຄະແນນ:

ຄະນິດສາດ ໄດ້ 4 ຄະແນນເຕັມ 10
ພາສາອັງກິດ ໄດ້ 2 ຄະແນນເຕັມ10
ວິທະຍາສາດ ໄດ້ 6 ຄະແນນເຕັມ 10
ພາສາລາວ ໄດ້ 5 ຄະແນນເຕັມ 10

ສົມສີ ໂມໂຫຢ່າງຮຸນແຮງ, ໃຫ້ລູກໄປຮຽນທຸກມື້ລູກຄືເສັງຕົກ; ຜູ້ເປັນເມຍເລີຍບອກວ່າ " ໃຈເຢັນໆ ບໍ່ມີໃຜຊິເກັ່ງໄປໝົດດອກ"; ຈາກນັ້ນ, ລູກກໍຍ່າງເຂົ້າມາໃກ້ສົມສີ ແລ້ວບອກວ່າ "ພໍ່ມື້ນີ້ ຂ້ອຍໄປຄົ້ນແກັດເຄື່ອງເກົ່າເຈົ້າ, ເຫັນໃບຄະແນນຂອງເຈົ້າຈຶ່ງຈັບມາໃຫ້ເຈົ້າເບິ່ງ"



## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

"ໜຶ່ງພັນຄຳເອົ້າ ເອົາພິສູດຕົນ ໝື່ນອັກສອນພົ່ນຊຽນຈົບລົ້ນໜັງສື ຄຳສັນຍາແສນຄັ້ງຊ່າງເລົ່າລືຍັງບໍ່ເທົ່າ ຄັ້ງດຽວຄື ລົງມືທຳ"

ລັດຖະສະພາຕ່າງປະເທດ

# ອິນໂດເນເຊຍ ເພີ່ມເບ້ຍລ້ຽງໃຫ້ສະມາຊິກສະພາ, ຢືນຢັນວ່າບໍ່ໄດ້ຂຶ້ນເງິນເດືອນ

(REUTERS) - ລັດຖະບານອິນໂດເນເຊຍ ປັບຂຶ້ນເບ້ຍລ້ຽງໃຫ້ສະມາຊິກສະພານິຕິບັນຍັດເກືອບສອງເທົ່າຫຼັງຈາກຍົກເລີກບາງຜົນປະໂຫຍດທີ່ມອບໃຫ້ພວກເຂົາເມື່ອເດືອນກັນຍາ ເພື່ອພະຍາຍາມບັນເທົາຄວາມໂກດແຄ້ນຂອງປະຊາຊົນ ຈາກການຊຸມນຸມປະທ້ວງຢ່າງຮຸນແຮງຫຼາຍຄັ້ງ.

ວັນທີ13ຕຸລາຜ່ານມາ, ຊຸຟມິ ດາສໂກ ອາໝັດ (Sufmi Dasco Ahmad) ຮອງປະທານສະພາຜູ້ແທນປະຊາຊົນ ຫຼື ສະພາຕ່ຳຂອງອິນໂດເນເຊຍ ກ່າວວ່າ: ການປັບເພີ່ມ "ເບ້ຍລ້ຽງໄລຍະປິດສະໄໝປະຊຸມ" ໃຫ້ແກ່ສະມາຊິກສະພານິຕິບັນຍັດເຊິ່ງມອບໃຫ້ພວກເຂົາເພື່ອສະໜັບສະໜູນການເຮັດວຽກຢູ່ເຂດເລືອກຕັ້ງຂອງຕົນເອງໃນຂະນະທີ່ລັດຖະສະພາບໍ່ຢູ່ໃນສະໄໝປະຊຸມ ມີຜົນບັງຄັບໃຊ້ເມື່ອວັນທີ 3 ເດືອນຕຸລາ 2025 ເຊິ່ງເປັນໄລຍະເລີ່ມຕົ້ນຂອງການປິດສະໄໝປະຊຸມຄັ້ງຫຼ້າສຸດ.

ປັດຈຸບັນ, ສະມາຊິກສະພານິຕິບັນຍັດແຕ່ລະຄົນ ຈະໄດ້ຮັບ 700 ລ້ານຣູເປຍ (ປະມານ 42 ພັນໂດລາ) ຕໍ່ການປິດສະໄໝປະຊຸມ ເພີ່ມຂຶ້ນຈາກ 400 ລ້ານຣູເປຍໃນເມື່ອກ່ອນ, ສະມາຊິກສະພາຕ່ຳ ທັງ 580 ຄົນ ຢຸດພັກປະມານ 5 ຄັ້ງຕໍ່ປີ.

ດາສໂກ ກ່າວຕື່ມວ່າ ເບ້ຍລ້ຽງໄດ້ຮັບການອະນຸມັດໂດຍກະຊວງການເງິນ ເມື່ອເດືອນພຶດສະພາຜ່ານມາ ແລະ ຖືກຈັດສັນໄວ້ສຳລັບການເດີນທາງຢ້ຽມຢາມ ແລະ ການຈັດກິດຈະກຳຕ່າງໆໃນເຂດເລືອກຕັ້ງຂອງຕົນເອງພ້ອມກັບເສີມວ່າການເພີ່ມເບ້ຍລ້ຽງໃນຄັ້ງນີ້ ບໍ່ແມ່ນການຂຶ້ນເງິນເດືອນແຕ່ຢ່າງໃດ.

ໃນເດືອນສິງຫາ, ນັກສຶກສາ, ກຸ່ມສິດທິມະນຸດ ແລະ ພົນລະເຮືອນຫຼາຍພັນຄົນ ໄດ້ເຂົ້າຮ່ວມການປະທ້ວງຕໍ່ຕ້ານນະໂຍບາຍການໃຊ້ຈ່າຍຂອງລັດຖະບານ, ລວມທັງການຂຶ້ນເງິນເດືອນໃຫ້ສະມາຊິກສະພານິຕິບັນຍັດ; ຕໍ່ມາ, ການປະທ້ວງໄດ້ລຸກລາມກາຍເປັນຈະລາຈົນຫຼັງຈາກຄົນຂັບລົດຈັກຮັບຈ້າງເສຍຊີວິດລະຫວ່າງປະຕິບັດການຂອງຕຳຫຼວດ. ຄວາມຮຸນແຮງດັ່ງກ່າວ ເຊິ່ງແຜ່ລາມໄປຍັງ 32 ແຂວງ ຈາກທັງໝົດ 38 ແຂວງຂອງອິນໂດເນເຊຍ ໄດ້ເຮັດໃຫ້ມີຜູ້ເສຍຊີວິດ 10 ຄົນແລະຢ່າງໜ້ອຍ 5,000 ຄົນຖືກຈັບກຸມ, ນັບເປັນເຫດການຄວາມບໍ່ສະຫງົບຄັ້ງຮ້າຍແຮງທີ່ສຸດໃນໝູ່ເກາະອິນໂດເນເຊຍໃນຮອບກວ່າ 2 ທົດສະວັດ.



# ລັດຖະສະພາເປຣູ ລົງຄະແນນສຽງປົດປະທານາທິບໍດີຍິງຄົນທຳອິດຂອງປະເທດ

(AFP) - ວັນສຸກທີ 10 ຕຸລາຜ່ານມາ, ສະມາຊິກລັດຖະສະພາເປຣູ ໄດ້ລົງມະຕິດ້ວຍສຽງສ່ວນຫຼາຍຢ່າງລົ້ນເຫຼືອ 118 ຈາກ 122 ສຽງ (ລັດຖະສະພາເປຣູ ມີ 130 ທີ່ນັ່ງ) ເພື່ອປົດປະທານາທິບໍດີ ດີນາ ໂບລູອາຣ໌ເຕ (Dina Boluarte) ອອກຈາກຕຳແໜ່ງຜູ້ນຳເປຣູ. ກ່ອນທ່ຽງຄືນວັນພະຫັດ, ສະມາຊິກລັດຖະສະພາ ໄດ້ຂໍໃຫ້ ໂບລູອາຣ໌ເຕ ມາປາກົດຕົວຕໍ່ໜ້າພວກເຂົາເພື່ອປົກປ້ອງຕົນເອງ; ເມື່ອນາງບໍ່ປາກົດຕົວ, ຫຼັງທ່ຽງຄືນບໍ່ດົນ ສະມາຊິກລັດຖະສະພາຈຶ່ງລົງມະຕິຂັບໄລ່ ໂບລູອາຣ໌ເຕ ອອກຈາກຕຳແໜ່ງ.



ຂະນະທີ່ ໂຮເຊ ເຣຣີ (Jose Jeri) ປະທານລັດຖະສະພາ ຈະປະຕິບັດໜ້າທີ່ຮັກສາການໃນຕຳແໜ່ງປະທານາທິບໍດີ ຈົນກວ່າຈະເຖິງກຳນົດການເລືອກຕັ້ງຄັ້ງຕໍ່ໄປໃນເດືອນເມສາ 2026.

ນັບຕັ້ງແຕ່ຮັບຕຳແໜ່ງໃນເດືອນທັນວາ 2022, ໂບລູອາຣ໌ເຕ ປະສົບກັບອຸປະສັກໃນການບໍລິຫານປະເທດມາຕະຫຼອດ; ຫຼາຍຝ່າຍກ່າວວ່ານາງຂາດຄວາມສາມາດທາງສິນທຳໃນການບໍລິຫານບ້ານເມືອງ ແລະ ມີຄວາມພະຍາຍາມປົດນາງຫຼາຍຄັ້ງ.

ຈົນເຖິງຕອນນີ້, ໂບລູອາຣ໌ເຕ ປະເຊີນກັບການສອບສວນຫຼາຍຢ່າງ, ໜຶ່ງໃນນັ້ນຄືກໍລະນີທີ່ເອີ້ນກັນວ່າ "Rolexgate" ຈາກການທີ່ນາງບໍ່ຊີ້ແຈງລາຍການຊັບສິນ ລວມທັງຂອງຂວັນຟຸ່ມເຟືອຍຫຼາຍລາຍການ ເຊິ່ງບໍ່ມີການລະບຸແຫຼ່ງທີ່ມາຢ່າງຊັດເຈນ.

ນອກຈາກນີ້, ນາງຍັງອະນຸມັດການຂຶ້ນເງິນເດືອນໃຫ້ກັບຕົນເອງເມື່ອເດືອນກໍລະກົດຜ່ານມາ ສວນທາງກັບຄະແນນຂອງນາງທີ່ເກືອບເປັນສູນ; ຕາມດ້ວຍການອອກກົດໝາຍເມື່ອເດືອນກັນຍາ ໃຫ້ກຸ່ມຄົນໜຸ່ມສາວຕ້ອງປະກອບສ່ວນເຂົ້າໃນກອງທຶນບຳເນັດບຳນານເອກະຊົນ ທັງທີ່ເປຣູປະເຊີນກັບຄວາມບໍ່ໝັ້ນຄົງຢ່າງສູງໃນຕະຫຼາດແຮງງານ ໂດຍອັດຕາການຈ້າງງານນອກລະບົບສູງກວ່າ 70% ແລະ ຍັງມີເລື່ອງຂອງບັນຫາອາຊະຍາກຳທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍໃນປີນີ້.

# Portugal ປະກາດໃຊ້ກົດໝາຍຄົນຕ່າງປະເທດ




(Xinhua) - ປະທານາທິບໍດີ ມາຣ໌ເຊໂລ ເຣເບໂລ ເດີ ຊູຊາ (Marcelo Rebelo de Sousa) ແຫ່ງ ປອກຕຸຍການ ໄດ້ປະກາດໃຊ້ກົດໝາຍວ່າດ້ວຍຄົນຕ່າງປະເທດ ສະບັບໃໝ່, ຕາມຖະແຫຼງການທີ່ເຜີຍແຜ່ເມື່ອວັນພະຫັດທີ 16 ຕຸລາຜ່ານມາ ຢູ່ເວັບໄຊຂອງສຳນັກງານປະທານາທິບໍດີ.

ການປະກາດໃຊ້ກົດໝາຍສະບັບນີ້ ມີຂຶ້ນພາຍຫຼັງການອະພິປາຍຢູ່ສະພາແຫ່ງຊາດເປັນເວລາຫຼາຍເດືອນຫຼັງຈາກສານລັດຖະທຳມະນູນ ໄດ້ຍົກເລີກບາງສ່ວນຂອງກົດໝາຍສະບັບກ່ອນໜ້າ. ກົດໝາຍສະບັບໃໝ່ ໄດ້ຈຳກັດວີຊາເຮັດວຽກສະເພາະເປັນ "ວຽກທີ່ມີຄຸນວຸດທິເໝາະສົມ" (qualified work) ແລະ ຈຳກັດການໂຮມຄອບຄົວສຳລັບຄົນຕ່າງປະເທດທີ່ອາໄສຢູ່ໃນປອກຕຸຍການ, ໂດຍມີຂໍ້ຍົກເວັ້ນສຳລັບຜູ້ລີ້ໄພ; ນອກຈາກນີ້, ຍັງປັບປຸງເງື່ອນໄຂສຳລັບໃບອະນຸຍາດທີ່ຢູ່ອາໄສສຳລັບພົນລະເມືອງຂອງປະຊາຄົມປະເທດທີ່ໃຊ້ພາສາປອກຕຸຍການ.

ໃນຖະແຫຼງການ, ເຣເບໂລ ເດີ ຊູຊາ ໄດ້ພິຈາລະນາວ່າ ກົດໝາຍທີ່ໄດ້ຮັບການປັບປຸງ ແລະ ອະນຸມັດໂດຍສະພາແຫ່ງຊາດ 70% ນັ້ນ "ຢ່າງໜ້ອຍທີ່ສຸດ ກໍແກ້ໄຂຄວາມສົງໄສທີ່ສຳຄັນກ່ຽວກັບຄວາມບໍ່ສອດຄ່ອງຕາມລັດຖະທຳມະນູນທີ່ເຂົາຍົກຂຶ້ນ ແລະ ໄດ້ຮັບການຢືນຢັນໂດຍສານລັດຖະທຳມະນູນ."

ກ່ອນໜ້ານີ້, ປະທານາທິບໍດີໄດ້ຍື່ນຮ່າງກົດໝາຍສະບັບເບື້ອງຕົ້ນໃຫ້ສານລັດຖະທຳມະນູນກວດກາເພື່ອປ້ອງກັນບັນຫາລ່ວງໜ້າ ໂດຍອ້າງເຖິງຄວາມເປັນຫ່ວງວ່າຂໍ້ຈຳກັດໃນການໂຮມຄອບຄົວນັ້ນ ບໍ່ສົມດຸນ ແລະ ອາດຈະບໍ່ປົກປ້ອງຜົນປະໂຫຍດສູງສຸດຂອງເດັກນ້ອຍໃນລະຫວ່າງການແຍກອອກຈາກຄອບຄົວ.

ສານລັດຖະທຳມະນູນໄດ້ປະຕິເສດ 5 ມາດຕາໃນຮ່າງກົດໝາຍສະບັບເບື້ອງຕົ້ນ ເມື່ອເດືອນສິງຫາຜ່ານມາ, ໂດຍໃຫ້ເຫດຜົນວ່າລະເມີດການປົກປ້ອງສິດຄອບຄົວຕາມລັດຖະທຳມະນູນ ແລະ ຫຼັກການສະຫງວນອຳນາດນິຕິ ບັນຍັດສຳລັບສິດທິຂັ້ນພື້ນຖານ.

ລັດຖະດຳລັດສະບັບປັບປຸງຍັງຮັກສາຂໍ້ກຳນົດການຢູ່ອາໄສ 2 ປີ ສຳລັບການມີສິດໂຮມຄອບຄົວ ແຕ່ຍົກ ເວັ້ນຜູ້ເຍົາ ຫຼື ຜູ້ຢູ່ໃນຄອບຄົວທີ່ບໍ່ສາມາດເບິ່ງແຍງຕົນເອງໄດ້ ແລະ ຄູ່ສົມລົດ ຫຼື ຄູ່ຊີວິດ ເຊິ່ງເປັນຜູ້ຮ່ວມລ້ຽງດູຜູ້ເຍົາ ຫຼື ຜູ້ຢູ່ໃນຄອບຄົວທີ່ບໍ່ສາມາດເບິ່ງແຍງຕົນເອງໄດ້; ສຳລັບຄູ່ສົມລົດ ຫຼື ຄູ່ຊີວິດ ທີ່ຕອບສະໜອງໄດ້ເງື່ອນໄຂການຢູ່ຮ່ວມກັນ, ໄລຍະເວລາການຢູ່ອາໄສຈະຫຼຸດລົງເປັນ 15 ເດືອນ.

# Uruguay ຜ່ານກົດໝາຍຊ່ວຍເສຍຊີວິດເປັນທາງເລືອກໃຫ້ຜູ້ປ່ວຍທີ່ປິ່ນປົວບໍ່ໄດ້



(BBC)-ອູຣຸກວາຍປະກາດໃຫ້ການຊ່ວຍເສຍຊີວິດ (assisteddying) ຖືກກົດໝາຍ, ກາຍເປັນໜຶ່ງໃນປະເທດທຳອິດຂອງອາເມລິກາລາຕິນ ແລະ ໜຶ່ງໃນສິບປະເທດທົ່ວໂລກ ທີ່ອະນຸຍາດໃຫ້ມີການຊ່ວຍເສຍຊີວິດ; ອູຣຸກວາຍ ມີປະຫວັດຄວາມເປັນມາອັນຍາວນານໃນການຜ່ານກົດໝາຍເສລີນິຍົມ ລວມທັງການໃຫ້ກັນຊາ, ການແຕ່ງງານຂອງຄົນເພດດຽວກັນ ແລະ ການເອົາລູກອອກ ຖືກກົດໝາຍກ່ອນປະເທດອື່ນໆໃນພາກພື້ນ.

ວັນທີ14ຕຸລາຜ່ານມາ, ກົດໝາຍຊ່ວຍເສຍຊີວິດ ທີ່ມີຊື່ວ່າ "ການເສຍຊີວິດທີ່ມີກຽດ" (Dignified Death) ໄດ້ຖືກຮັບຮອງເອົາໂດຍສະພາສູງດ້ວຍຄະແນນສຽງ 20 ຈາກສະມາຊິກທັງໝົດ 30 ຄົນ. ການຢັ່ງຫາງສຽງເມື່ອບໍ່ດົນມານີ້ສະແດງໃຫ້ເຫັນວ່າຫຼາຍກວ່າ 60% ຂອງຊາວອູຣຸກວາຍ ສະໜັບສະໜູນໃຫ້ມີກົດໝາຍການຊ່ວຍເສຍຊີວິດ, ມີພຽງ 24% ຄັດຄ້ານ.

ກົດໝາຍນີ້ ອະນຸຍາດໃຫ້ຜູ້ໃຫຍ່ທີ່ມີສຸຂະພາບຈິດດີ ແລະ ຢູ່ໃນໄລຍະສຸດທ້າຍຂອງພະຍາດຊຳເຮື້ອທີ່ປິ່ນປົວບໍ່ໄດ້ ເຊິ່ງເຮັດໃຫ້ຜູ້ປ່ວຍທຸກທໍລະມານ ສາມາດເຂົ້າຮັບການຊ່ວຍເສຍຊີວິດ.

# ສານສູງສຸດ Moldova ຢືນຢັນ ຜົນການເລືອກຕັ້ງລັດຖະສະພາ



(Xinhua) - ວັນທີ 16 ຕຸລາຜ່ານມາ, ສານລັດຖະທຳມະນູນໂມນດາວີ ໄດ້ຢືນຢັນຜົນຂອງການເລືອກຕັ້ງ ລັດຖະສະພາ ເມື່ອວັນທີ 28 ກັນຍາ 2025 ໂດຍໄດ້ຮັບຮອງເອົາສິດອຳນາດຂອງສະມາຊິກລັດຖະສະພາຊຸດໃໝ່ ທັງໝົດ 101 ທ່ານ ແລະ ເປີດທາງເພື່ອສ້າງຕັ້ງລັດຖະບານຊຸດໃໝ່.

ຕາມການນັບຄະແນນຄັ້ງສຸດທ້າຍ, ພັກແຫ່ງປະຕິບັດ ແລະ ຄວາມສາມັກຄີ (Party of Action and Solidarity - PAS) ໄດ້ 55 ທີ່ນັ່ງ ເຮັດໃຫ້ພັກມີສຽງສ່ວນຫຼາຍຢ່າງຈະແຈ້ງໃນລັດຖະສະພາ, ຕາມມາດ້ວຍພັກຮັກຊາດ 26 ທີ່ນັ່ງ, ພັກທາງເລືອກ 8 ທີ່ນັ່ງ, ພັກຂອງພວກເຮົາ ແລະ ພັກປະຊາທິປະໄຕໄດ້ພັກລະ 6 ທີ່ນັ່ງ.

ຕາມລັດຖະທຳມະນູນ, ລັດຖະສະພາຊຸດໃໝ່ຈະຖືກສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍເມື່ອປະທານາທິບໍດີຮຽກປະຊຸມພາຍໃນ 30 ວັນຫຼັງການເລືອກຕັ້ງ; ຈາກນັ້ນ, ສະມາຊິກລັດຖະສະພາຈະມີເວລາ 10 ວັນເພື່ອເລືອກຕັ້ງຜູ້ນຳລັດຖະສະພາ ແລະ ສ້າງຕັ້ງກຸ່ມຕ່າງໆ.

PAS ໄດ້ປະກາດໃຫ້ອະເລັກຊານດຣູ ມຸນເຕຍນູ (Alexandru Munteanu) ນັກເສດຖະສາດ ແລະ ນັກທຸລະກິດ ເປັນຜູ້ສະໝັກເປັນນາຍົກລັດຖະມົນຕີ ໂດຍພັກຈະສ້າງຕັ້ງລັດຖະບານຊຸດຕໍ່ໄປຢ່າງເອກະລາດ.

ລັດຖະສະພາໂມນດາວີມີວາລະການດຳລົງຕຳແໜ່ງ 4 ປີ.

# ລັດຖະສະພາເກຣັກ ຜ່ານກົດໝາຍເຮັດວຽກວັນລະ 13 ຊົ່ວໂມງ "ບາງໂອກາດ" ທ່າມກາງສຽງຄ້ານ




(BBC) - ລັດຖະສະພາເກຣັກ ເຊິ່ງພັກລັດຖະບານຝ່າຍຂວາຖືສຽງສ່ວນຫຼາຍ ໄດ້ອະນຸມັດກົດໝາຍທີ່ສະໜັບສະໜູນໃຫ້ພົນລະເມືອງເຮັດວຽກ 13 ຊົ່ວໂມງ "ໃນບາງກໍລະນີ" ເຖິງແມ່ນວ່າປະເຊີນກັບການຄັດຄ້ານຢ່າງແຮງຈາກສະຫະພັນແຮງງານ ແລະ ພັກຝ່າຍຄ້ານ.

ວັນທີ 16 ຕຸລາຜ່ານມາ, ສະຫະພັນແຮງງານ ໄດ້ຈັດການປະທ້ວງຄັ້ງໃຫຍ່ສອງຄັ້ງໃນເດືອນນີ້ ໂດຍມີຄົນງານຫຼາຍພັນຄົນເຂົ້າຮ່ວມ ເພື່ອຕໍ່ຕ້ານການປະຕິຮູບດັ່ງກ່າວ; ຂະນະທີ່ພັກຊີຣິຊາ (Syriza) ເຊິ່ງເປັນພັກຝ່າຍຊ້າຍທີ່ເປັນແກນນຳຝ່າຍຄ້ານ ໄດ້ວິພາກວິຈານວ່າ ເປັນກົດໝາຍທີ່ເໝາະສົມກັບ "ຍຸກກາງ". ຍິ່ງໄປກວ່ານັ້ນ, ຝ່າຍຄ້ານປະຕິເສດເຂົ້າຮ່ວມການລົງຄະແນນສຽງກ່ຽວກັບກົດໝາຍດັ່ງກ່າວ; ໂຄສົກຂອງພັກຊີຣິຊາ ປະນາມກົດໝາຍສະບັບນີ້ວ່າ ເປັນ "ຄວາມໂຫດຮ້າຍທາງກົດໝາຍ".

ນິກີ ເຄຣາເມອຸສ (Niki Kerameus) ລັດຖະມົນຕີກະຊວງແຮງງານ ຢືນຢັນວ່າ "ບໍ່ແມ່ນການບັງຄັບ" ມີຜົນສະເພາະກັບພາກເອກະຊົນ ແລະ ໃຊ້ໄດ້ບໍ່ເກີນ 37 ວັນຕໍ່ປີ ເພື່ອເຮັດໃຫ້ລູກຈ້າງໄດ້ຮັບຄ່າຈ້າງເພີ່ມຂຶ້ນ 40%; ຂະນະທີ່ຜູ້ເຊິ່ງມີນາຍຈ້າງຫຼາຍກວ່າ 1 ລາຍ ຈະສາມາດມີຊົ່ວໂມງເຮັດວຽກທີ່ຫຼາຍຂຶ້ນ.

ແນວໃດກໍດີ, ສະຫະພັນແຮງງານ ແລະ ຜູ້ປະທ້ວງ ເຫັນວ່າ ລູກຈ້າງອາດສ່ຽງຕໍ່ການຖືກເລີກຈ້າງ ຫາກປະຕິເສດທີ່ຈະເຮັດວຽກເພີ່ມ; ຝ່າຍທີ່ວິພາກວິຈານຊີ້ວ່າ, ເມື່ອພິຈາລະນາເວລາເດີນທາງທີ່ຍາວນານ, ລູກຈ້າງຈະມີເວລາພັກຜ່ອນໜ້ອຍກວ່າສິດຕາມກົດໝາຍ ເຊິ່ງຢູ່ທີ່ 11 ຊົ່ວໂມງຕໍ່ວັນ.

ການປະຕິຮູບນີ້ ເປັນມາດຕະການເພື່ອຊ່ວຍເຫຼືອນາຍຈ້າງໃນຂະແໜງການບໍລິການທີ່ຂາດແຄນແຮງງານໃນລະດູຮ້ອນ, ໃນຂະນະທີ່ເວລາເຮັດວຽກຕາມກົດໝາຍຂອງເກຣັກແມ່ນ 8 ຊົ່ວໂມງຕໍ່ວັນ.

ກ່ອນໜ້ານີ້, ລັດຖະບານອອກກົດໝາຍເຮັດວຽກອາທິດລະ 6 ວັນ ສຳລັບບາງຂະແໜງການອຸດສາຫະກຳ ເຊັ່ນການທ່ອງທ່ຽວ, ແຕ່ສະເພາະໃນລະດູການທ່ອງທ່ຽວທີ່ມີຄວາມຕ້ອງການສູງ.

# ສິງກະໂປ ສະເໜີຮ່າງກົດໝາຍປົກປ້ອງ ຜູ້ເຄາະຮ້າຍຈາກການລ່ວງລະເມີດທາງອິນເຕີເນັດ



(Straitstimes) - ວັນທີ 16 ຕຸລາຜ່ານມາ, ລັດຖະບານສິງກະໂປ ໄດ້ສະເໜີຮ່າງກົດໝາຍເພື່ອສ້າງຕັ້ງອົງການໃໝ່ທີ່ມີອຳນາດບັງຄັບໃຫ້ບໍລິສັດສື່ສັງຄົມ ລຶບຂໍ້ຄວາມ (ໂພສ) ທີ່ເປັນອັນຕະລາຍ, ປິດກັ້ນການເຂົ້າເຖິງ ຫຼື ລຶບແອັບພລິເຄຊັນ ເພື່ອປົກປ້ອງຜູ້ໃຊ້ຈາກການຂົ່ມເຫັງທາງໄຊເບີແລະການລະເມີດທາງອອນລາຍ ໃນຮູບແບບອື່ນໆ.

ເນື່ອງຈາກຊາວສິງກະໂປຈຳນວນຫຼາຍຕົກເປັນເຫຍື່ອຂອງເນື້ອຫາອອນລາຍທີ່ເປັນອັນຕະລາຍ, ລັດຖະບານຈຶ່ງລະບຸວ່າ ຮ່າງກົດໝາຍຄວາມປອດໄພອອນລາຍ ຈະຊ່ວຍໃຫ້ພວກເຂົາໄດ້ຮັບການບັນເທົາທຸກ ແລະ ຄວາມຮັບຜິດຊອບທາງກົດໝາຍ, ຮ່າງກົດໝາຍດັ່ງກ່າວ ກຳນົດໃຫ້ມີການສ້າງຕັ້ງຄະນະກຳມະການຄວາມປອດໄພອອນລາຍ (Online Safety Commission - OSC) ເຊິ່ງມີອຳນາດໃນການຈັດການຄຳຮ້ອງຮຽນກ່ຽວກັບເນື້ອຫາທີ່ເປັນອັນຕະລາຍ.

"OSC ຈະມີອຳນາດໃນການສັ່ງລຶບເນື້ອຫາທີ່ເປັນອັນຕະລາຍ, ຈຳກັດບັນຊີອອນລາຍຂອງຜູ້ກະທຳຜິດ ຫຼື ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍ ໂພສຂໍ້ຄວາມຕອບກັບໄດ້" ກະຊວງການພັດທະນາຂໍ້ມູນດິຈິຕອນ ແລະ ກະຊວງກົດໝາຍ ກ່າວໃນຖະແຫຼງການຮ່ວມ; ຖະແຫຼງການກ່າວຕື່ມວ່າ ຄຳສັ່ງລຶບເນື້ອຫາ ອາດອອກໃຫ້ຜູ້ໂພສເນື້ອຫາທີ່ເປັນອັນຕະລາຍ, ຜູ້ດູແລລະບົບອອນລາຍ ຫຼື ເວທີສື່ສັງຄົມ ພ້ອມກັບເຕືອນວ່າ ການບໍ່ປະຕິບັດຕາມຄຳສັ່ງ ຖືເປັນການກະທຳຜິດທາງອາຍາ ແລະ ໃນກໍລະນີເຊັ່ນນີ້, ຄະນະກຳມະການ ສາມາດອອກຄຳສັ່ງເພື່ອປິດກັ້ນການເຂົ້າເຖິງ ຫຼື ລຶບແອັບພລິເຄຊັນ ເພື່ອຢຸດອັນຕະລາຍທາງອອນລາຍ. "ການເຂົ້າເຖິງດິຈິຕອນ ກາຍເປັນສ່ວນສຳຄັນໃນຊີວິດປະຈຳວັນຂອງພວກເຮົາ, ແຕ່ມັນກໍເຮັດໃຫ້ເກີດຄວາມກັງວົນຫຼາຍເຊັ່ນກັນ ໂດຍຜູ້ບໍ່ປະສົງດີ ໃຊ້ອິນເຕີເນັດໃນທາງທີ່ຜິດເພື່ອຂົ່ມຂູ່ຫຼືຂົ່ມເຫັງຄົນອື່ນ ແລະ ເຜີຍແຜ່ເນື້ອຫາທີ່ເປັນອັນຕະລາຍ." ຖະແຫຼງການຮ່ວມລະບຸໃນຕອນທ້າຍ.



## ປະທານ...

(ຕໍ່ຈາກໜ້າ 6)

ດາແຂວງພາກເໜືອຂອງ ສປປ ລາວ, ສະຖານທູດ ລາວ ປະຈຳ ສສ ຫວຽດນາມ, ມີບັນດາສະຖານທູດ, ທູຕານຸທູດ ທີ່ມີສຳນັກງານຕັ້ງຢູ່ ສສ.ຫວຽດນາມ ຈຳນວນໜຶ່ງ, ມີແຂກຖືກເຊີນທັງພາຍໃນ, ຕ່າງປະເທດເຂົ້າຮ່ວມ ແລະ ໃຫ້ກຽດຕ້ອນຮັບການນຳບັນດາແຂວງພາກເໜືອຂອງ ສປປລາວ ໂດຍທ່ານເຈິ່ນກວກເກື່ອງກຳມະການສູນກາງພັກເລຂາພັກແຂວງດ້ຽນບຽນ.

ໃນງານບຸນໄດ້ມີການສະແດງສິລະປະດົນຕີ, ຮ້ອງເພງ-ຟ້ອນລຳແບບດັ້ງເດີມທີ່ເປັນເອກະລັກສະເພາະ ເນັ້ນໃຫ້ເຫັນເຖິງຈຸດເດັ່ນທາງດ້ານວັດທະນາທຳ, ທຳມະຊາດທີ່ຂຽວຊີດງົດງາມ ແລະຄວາມພິລະອາດຫານຂອງປະຊາຊົນບັນດາເຜົ່າຂອງຊາວຫວຽດນາມ; ມີການສະແດງສິນຄ້າຫັດຖະກຳ, ສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ ແລະ ສິນຄ້າອື່ນໆ ທີ່ມີຊື່ສຽງຂອງພາກພື້ນ ເຊິ່ງເປັນການສົ່ງເສີມ ແລະ ດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ອງທ່ຽວໃນພາກພື້ນ ໄດ້ເປັນຢ່າງດີ. ນອກຈາກນີ້, ໃນງານດັ່ງກ່າວ ຄະນະຜູ້ແທນແຂວງຫຼວງພະບາງ ກໍໄດ້ນຳເອົາ ສິລະປະວັດທະນາທຳຂອງແຂວງ ໄປຮ່ວມສະແດງໃນເວທີດັ່ງກ່າວ ເປັນການສະແດງເຖິງວັດທະນາທຳ ຮີດຄອງປະເພນີ ຂອງຊາດລາວ.

**(ວຽງໄຊ ສັກລຳດວນ)**

# ປະທານສະພາສູງ ຖືກປົດອອກຈາກຕຳແໜ່ງ, ສຳນັກງານປະທານາທິບໍດີ ຍຸບສະພາແຫ່ງຊາດ, ສະພາແຫ່ງຊາດ ຖອດຖອນປະທານາທິບໍດີ

(Xinhua)-ສຳນັກງານຖາວອນຂອງສະພາສູງມາດາກາສະກາ(Madagascar)ປະກາດວ່າ ຣິຊາດ ຣາວາໂລມານານາ (Richard Ravalomanana) ໄດ້ຖືກປົດອອກຈາກຕຳແໜ່ງປະທານສະພາສູງແລ້ວ ເຊິ່ງໄດ້ຊີ້ແຈງໃນຖະແຫຼງການເມື່ອວັນອາທິດທີ 12 ຕຸລາຜ່ານມາວ່າ ການຕັດສິນໃຈຄັ້ງນີ້ ມີຂຶ້ນຫຼັງຈາກການປຶກສາຫາລືຢ່າງລະອຽດກັບສະມາຊິກສະພາສູງທຸກຄົນ (ທັງໝົດ 18 ທີ່ນັ່ງ), ໂດຍຄຳນຶງເຖິງສະຖານະການຂອງປະເທດໃນປັດຈຸບັນ; ສຳນັກງານຖາວອນໃຫ້ເຫດຜົນວ່າຕ້ອງປົກປັກຮັກສາ "ຜົນປະໂຫຍດສູງສຸດຂອງຊາດ"ແລະເພີ່ມທະວີຄວາມສາມັກຄີພາຍໃນສະຖາບັນທາງການເມືອງ.

ຕໍ່ມາ, ສະມາຊິກສະພາສູງໄດ້ແຕ່ງຕັ້ງ ຊອງ ອັງເດຣ ເອັນເດຣມານຈາຣີ (Jean Andre Ndremanjary) ເປັນປະທານສະພາສູງຊົ່ວຄາວ ເຊິ່ງຈະບໍລິຫານວຽກງານໃນປັດຈຸບັນຂອງສະພາສູງ ຈົນກວ່າຈະມີການເລືອກຕັ້ງປ ທານຜູ້ໃໝ່, ພ້ອມທັງຮຽກຮ້ອງໃຫ້ປະຊາຊົນເຄົາລົບກົດໝາຍແລະຮັກສາຄວາມສາມັກຄີແຫ່ງຊາດບົນຈິດໃຈສັນຕິພາບ ແລະ ສະຖຽນລະພາບ.



ພົອ. ໄມເຄີນ ຣັນເດຣຍນີຣີນາ

ຕາມລັດຖະທຳມະນູນ, ປະທານສະພາສູງ ຈະເຂົ້າຮັບຕຳແໜ່ງປະທານາທິບໍດີຊົ່ວຄາວຂອງສາທາລະນະລັດມາດາກາສະກາ ໃນກໍລະນີທີ່ເກີດສູນຍາກາດທາງການເມືອງ (power vacuum).

ວັນທີ 14 ຕຸລາ, ສຳນັກງານປະທານາທິບໍດີ ໄດ້ປະກາດການຍຸບສະພາແຫ່ງຊາດທີ່ມີທັງໝົດ 163 ທີ່ນັ່ງ, ຕາມຄຳສັ່ງທີ່ອອກໂດຍສຳນັກງານປະທານາທິບໍດີ; ຄຳສັ່ງລະບຸວ່າ "ສະພາແຫ່ງຊາດ ຖືກຍຸບຕາມມາດຕາ 60 ຂອງລັດຖະທຳມະນູນ".

ສື່ມວນຊົນທ້ອງຖິ່ນລາຍງານວ່າ, ການປະກາດຍຸບສະພາມີຂຶ້ນໃນຂະນະທີ່ສະພາແຫ່ງຊາດ "ພວມຢູ່ໃນຂະບວນການຮວບຮວມລາຍເຊັນເພື່ອຮຽກປະຊຸມສະໄໝວິສາມັນເພື່ອຖອດຖອນປະມຸກລັດ"; ສື່ມວນຊົນໄດ້ອ້າງຄຳເວົ້າຂອງ ຊິເຕນີ ຣັນເດຣຍນາໂຊໂລເນຍໂກ (Siteny Randrianasoloniaiko) ຮອງປະທານສະພາແຫ່ງຊາດ ວ່າຄຳສັ່ງຍຸບສະພາ "ບໍ່ມີຜົນທາງກົດໝາຍ ເນື່ອງຈາກຂາດການຮັບຮອງຢ່າງເປັນທາງການ."

ການປະທ້ວງໄດ້ເກີດຂຶ້ນໃນມາດາກາສະກາເມື່ອທ້າຍເດືອນກັນຍາຜ່ານມາໂດຍເບື້ອງຕົ້ນແມ່ນເກີດຈາກໄຟຟ້າດັບ ແລະ ນໍ້າປະປາຂາດແຄນ ຢ່າງກວ້າງຂວາງ, ການປະທ້ວງໄດ້ທະວີຄວາມຮຸນແຮງຂຶ້ນ ແລະ ມີມິຕິທາງການເມືອງເຂົ້າມາກ່ຽວຂ້ອງ ໂດຍຮຽກຮ້ອງໃຫ້ມີການປະຕິຮູບການປົກຄອງແລະປ່ຽນແປງຜູ້ນຳ;ການປະທ້ວງໄດ້ປ່ຽນທິດທາງໃນວັນເສົາທີ 11 ຕຸລາ ເມື່ອກອງພົນທະຫານຮາບໜ່ວຍໜຶ່ງ ໄດ້ປະກາດສະໜັບສະໜູນ ແລະ ປົກປ້ອງຜູ້ປະທ້ວງຈາກການກະທຳທີ່ຖືກອະທິບາຍວ່າເປັນການລະເມີດໂດຍກອງກຳລັງຮັກສາຄວາມປອດໄພ.

ໃນຖະແຫຼງການເມື່ອວັນອາທິດ, ສຳນັກງານປະທານາທິບໍດີກ່າວວ່າ "ມີຄວາມພະຍາຍາມທີ່ຈະຍຶດອຳນາດຢ່າງຜິດກົດໝາຍ ແລະໂດຍໃຊ້ກຳລັງ" ແລະຮຽກຮ້ອງໃຫ້ທຸກພາກສ່ວນຂອງປະເທດ "ຮ່ວມມືກັນເພື່ອປົກປ້ອງລະບຽບລັດຖະທຳມະນູນ ແລະ ອະທິປະໄຕແຫ່ງຊາດ."

ເມື່ອວັນຈັນ, ປະທານາທິບໍດີ ອັນດຣີ ຣາໂຈເອລີນາ (Andry Rajoelina) ກ່າວໃນວິດີໂອທີ່ລົງໃນສື່ສັງຄົມວ່າ ເຂົາໄດ້ລີ້ໄພຢູ່ "ສະຖານທີ່ປອດໄພ" ເພື່ອຮັບປະກັນຄວາມປອດໄພຂອງຕົນເອງຫຼັງຈາກຄວາມພະຍາຍາມລອບສັງຫານເຂົາ.

ສະພາແຫ່ງຊາດ ໄດ້ລົງມະຕິຖອດຖອນປະທານາທິບໍດີ ອັນດຣີ ຣາໂຈເອລີນາ ໃນກອງປະຊຸມສະໄໝວິສາ ມັນທີ່ນະຄອນຫຼວງອັນຕານານາຣີໂວ (Antananarivo) ເມື່ອວັນອັງຄານທີ 14 ຕຸລາ, ເຖິງແມ່ນວ່າກ່ອນໜ້ານີ້ສຳນັກງານປະທານາທິບໍດີໄດ້ຍຸບສະພາແລ້ວກໍຕາມ.

"ການລົງມະຕິຖອດຖອນປະທານາທິບໍດີ ອັນດຣີ ຣາໂຈເອລີນາ ໄດ້ຖືກອະນຸມັດແລ້ວ; ໃນຈຳນວນສະມາຊິກສະພາ131 ຄົນ ທີ່ເຂົ້າຮ່ວມການລົງມະຕິ, ມີ 130 ຄົນ ໄດ້ລົງຄະແນນສຽງເຫັນດີຖອດຖອນ, ຂະນະທີ່ 1 ຄົນງົດອອກສຽງ" ຮອງປະທານສະພາແຫ່ງຊາດຊິເຕນີຣັນເດຣຍນາໂຊໂລເນຍໂກ ກ່າວຫຼັງການປະຊຸມ.

ການຕັດສິນໃຈດັ່ງກ່າວມີຂຶ້ນພຽງບໍ່ເທົ່າໃດຊົ່ວໂມງຫຼັງຈາກທີ່ ຣາໂຈເອລີນາ ປະກາດຍຸບສະພາແຫ່ງຊາດ.

ໃນວັນດຽວກັນ, ພົອ. ໄມເຄີນ ຣັນເດຣຍນີຣີນາ (Michael Randrianirina) ຜູ້ບັນຊາການກອງບັນຊາການແຄປແຊດ (CAPSAT) ເຊິ່ງເປັນໜ່ວຍຮົບພິເສດຂອງກອງທັບມາດາກາສະກາ ປະກາດວ່າ ອຳນາດລັດໃນມາດາກາສະກາໄດ້ຖືກຍຶດໂດຍສະພາທະຫານທີ່ປະກອບດ້ວຍສະມາຊິກຈາກກອງທັບ, ກອງກຳລັງຮັກສາສັນຕິພາບແລະຕຳຫຼວດແຫ່ງຊາດ. ເຂົາກ່າວວ່າ ລັດຖະທຳມະນູນໄດ້ຖືກໂຈະໄວ້ແລະມີການສ້າງຕັ້ງໂຄງປະກອບລະດັບຊາດໃໝ່ "ເພື່ອຕອບສະໜອງຄວາມປາດຖະໜາຂອງປະຊາຊົນຊາວມາດາກາສະກາ." ເຂົາຍັງປະກາດຍຸບສະຖາບັນຂອງລັດທີ່ສຳຄັນຫຼາຍແຫ່ງ ລວມທັງສະພາສູງ, ສານລັດຖະທຳມະນູນສູງສຸດແລະຄະນະກຳມະການເລືອກຕັ້ງເອກະລາດແຫ່ງຊາດ.

ວັນທີ 15 ຕຸລາ, ກອງບັນຊາການ CAPSAT ໄດ້ປະກາດສ້າງຕັ້ງລັດຖະບານຮັກສາການແລະຢືນຢັນວ່າຈະດຳເນີນການເລືອກຕັ້ງທົ່ວໄປຄັ້ງໃໝ່ພາຍໃນໄລຍະເວລາອີກ 2 ປີ, ຂະນະທີ່ສານລັດຖະທຳມະນູນໄດ້ຮັບຮອງ ພົອ. ໄມເຄີນ ຣັນເດຣຍນີຣີນາ ເປັນປະທານາທິບໍດີຜູ້ໃໝ່.



# ສະພາແຫ່ງຊາດຫວຽດນາມ ຈະຜ່ານ ຮ່າງກົດໝາຍ ແລະ ມະຕິ 53 ສະບັບ




(Xinhua) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດຫວຽດນາມ ຊຸດທີXV ໄດ້ໄຂຂຶ້ນໃນວັນຈັນທີ 20 ຕຸລາຜ່ານມາ, ຄາດວ່າສະມາຊິກສະພາແຫ່ງຊາດ ຈະຜ່ານຮ່າງກົດໝາຍ ແລະ ມະຕິ 53 ສະບັບ ເຊິ່ງກອງປະຊຸມຄັ້ງນີ້ແມ່ນກອງປະຊຸມຄັ້ງສຸດທ້າຍຂອງວາລະປີ 2021-2026 ໂດຍຈະກວດກາ, ພິຈາລະນາ ແລະ ຕົກລົງຫຼາຍບັນຫາ, ໃນນັ້ນມີບັນດາບັນຫາສຳຄັນທາງຍຸດທະສາດ.

ກ່າວຄຳເຫັນໄຂກອງປະຊຸມ, ເຈິ່ນ ແທ່ງ ເໝິນ ປະທານສະພາແຫ່ງຊາດ ໃຫ້ຮູ້ວ່າ: ນີ້ແມ່ນວຽກງານດ້ານນິຕິບັນຍັດທີ່ຫຼາຍທີ່ສຸດໃນປະຫວັດສາດຂອງກອງປະຊຸມສະພາແຫ່ງຊາດ. ຕາມທີ່ປະທານກ່າວ, ບັນດາຮ່າງກົດໝາຍໄດ້ກວມເອົາເກືອບທຸກຂົງເຂດສຳຄັນ ລວມທັງຫຼາຍບັນຫາໃໝ່ແລະບັນຫາທີ່ປ່ຽນແປງຢ່າງວ່ອງໄວ ແລະ ມີຈຸດປະສົງເພື່ອວາງຮາກຖານໃຫ້ແກ່ບັນດາແນວທາງ ແລະ ມະຕິໃໝ່ຂອງພັກຢ່າງທັນການເຊິ່ງຈະສຸມໃສ່ລົບລ້າງສິ່ງກີດຂວາງດ້ານສະຖາບັນ ໂດຍສະເພາະແມ່ນຂົງເຂດທີ່ດິນ, ການລົງທຶນ, ການວາງແຜນ, ການກໍ່ສ້າງ, ສິ່ງແວດລ້ອມ ແລະ ພະລັງງານ.

ວາລະສຳຄັນຕົ້ນຕໍລວມມີການປັບປຸງແຜນແມ່ບົດແຫ່ງຊາດ ໄລຍະປີ 2021-2030, ເລື່ອງບຸກຄະລາກອນແລະຄວາມຄິດເຫັນກ່ຽວກັບຮ່າງເອກະສານທີ່ຈະສະເໜີຕໍ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມ.

ກອງປະຊຸມສະໄໝສາມັນເທື່ອທີ 10 ທີ່ດຳເນີນເປັນເວລາ 40 ວັນລັດຖະການ ຈະສິ້ນສຸດລົງໃນວັນທີ 11 ທັນວານີ້.

## ສພຂ ...

(ຕໍ່ຈາກໜ້າ 6)

ຖະກອນ ພາຍໃນສະພາປະຊາຊົນແຂວງ ຈົ່ງກຳແໜ້ນ, ສຶກສາຮໍ່າຮຽນເອົາຄວາມເສຍສະຫຼະຂອງນັກຮົບປະຕິວັດໃນຮຸ່ນກ່ອນ, ມີສະຕິຕໍ່ກົນອຸບາຍຂອງກຸ່ມຄົນທີ່ບໍ່ຫວັງດີ ຫວັງແຊກແຊງທຳລາຍລະບອບການເມືອງຂອງພວກເຮົາໃນທຸກຮູບການ ແລະ ຈົ່ງມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ເຊື່ອໝັ້ນຕໍ່ການນຳພາຂອງພັກ ກໍຄືແນວທາງການປ່ຽນແປງໃໝ່ຂອງພັກ, ກົດໝາຍຂອງລັດ, ເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນຜູ້ສືບທອດທີ່ດີໃນອະນາຄົດ.

**(ດວງຈັນ ທ່ຽງທຳ ແລະ ໄຊວາງ ຈູຈົ່ງ)**



# ພ້ອມກັນສ້າງມິດຕະພາບກັບສິ່ງແວດລ້ອມ

❖ ວິເສດ ສະແຫວງສຶກສາ

ວັນທີ 5 ມິຖຸນາ ຂອງທຸກໆປີ ໄດ້ຖືກກຳນົດເປັນວັນສິ່ງແວດລ້ອມສາກົນ, ເປັນວັນທີ່ຄົນໃນທົ່ວໂລກຕ້ອງໄດ້ທົບທວນກ່ຽວກັບບັນດາສິ່ງທ້າທາຍຕ່າງໆ ທີ່ເກີດມາຈາກສະພາບເສື່ອມໂຊມດ້ານສິ່ງແວດລ້ອມ; ດັ່ງນັ້ນ, ຜູ້ຂຽນຈຶ່ງຂໍທວນຄືນບາງເຫດການທີ່ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ໃຫ້ສົດໃສຍືນຍົງ ຢູ່ ສ.ເກົາຫຼີ ແລະ ອັງກິດ.

ທີ່ ສ.ເກົາຫຼີ ຂ່າວໜັງສືພິມ Vientiane Time 3 ສິງຫາ 2020 ໄດ້ໃຫ້ຮູ້ວ່າ: ນະຄອນຫຼວງເຊອູນ ຫຼື ໂຊນ ໄດ້ມີແຜນລຶບລ້າງເປັນກ້າວໆ ຈຳນວນລົດທາງການ ແລະ ລົດໂດຍສານສາທາລະນະ ທີ່ໃຊ້ນ້ຳມັນກາຊວນ ນັບແຕ່ປີ 2025 ເປັນຕົ້ນໄປ, ລົດທາງການຂອງອົງການປົກຄອງນະຄອນຫຼວງເຊອູນທີ່ແລ່ນດ້ວຍນ້ຳມັນກາຊວນນັ້ນ ຍັງກວມເອົາ 64.6% ຂອງຈຳນວນທັງໝົດ ແລະ ຈະຖືກປ່ຽນແທນດ້ວຍລົດທີ່ແລ່ນດ້ວຍພະລັງງານໄຟຟ້າ ກໍຄືພະລັງງານນ້ຳ (ໄຮໂດຼເຈັນ). ລາຍລະອຽດຂອງການປ່ຽນແປງມີດັ່ງນີ້: ພາຍໃນປີ 2025 ລົດທາງການທີ່ແລ່ນດ້ວຍນ້ຳມັນກາຊວນ 3,586 ຄັນ ຈາກຈຳນວນທັງໝົດ 5,153 ຄັນ ຈະຖືກປ່ຽນແທນດ້ວຍລົດພະລັງງານໄຟຟ້າ ແລະ ພະລັງງານນ້ຳ; ນອກຈາກນັ້ນ, ທາງອົງການປົກຄອງນະຄອນຫຼວງເຊອູນຍັງຈະໄດ້ປະສານງານຮ່ວມມືກັບພາກສ່ວນຜະລິດລົດ ເພື່ອເລັ່ງລັດຜະລິດລົດສາທາລະນະ ທີ່ເປັນມິດຕໍ່ສິ່ງແວດລ້ອມ ເຊິ່ງລວມມີລົດມອດໄຟ, ລົດນຳສົ່ງຄົນເຈັບ (ລົດໂຮງໝໍ) ແລະ ລົດເຮັດຄວາມສະອາດ (ລົດອະນາໄມ) ລົດປະເພດທີ່ກ່າວມານີ້ ເກືອບທັງໝົດແມ່ນແລ່ນດ້ວຍນ້ຳມັນກາຊວນ; ນັບແຕ່ເດືອນກໍລະກົດ 2020 ເປັນຕົ້ນມາ, ອົງການປົກຄອງນະຄອນຫຼວງເຊອູນ ໄດ້ເລີ່ມຫ້າມຊື້ລົດໃໝ່ທີ່ແລ່ນດ້ວຍນ້ຳມັນກາຊວນ ເພື່ອນຳໃຊ້ໃນວຽກທາງການ. ນີ້ຄືບາດກ້າວທຳອິດໃນການລຶບລ້າງການນຳໃຊ້ລົດນ້ຳມັນກາຊວນ; ຕໍ່ໄປທາງອົງການປົກຄອງນະຄອນຫຼວງ ກໍຈະລຶບລ້າງການນຳໃຊ້ລົດນ້ຳມັນກາຊວນ ໃນຂະແໜງຂົນສົ່ງຢູ່ນະຄອນຫຼວງ ເຊິ່ງລວມມີລົດແທັກຊີ, ລົດບັດ ປະຈຳສະໜາມບິນ ແລະ ລົດບັດນຳທ່ຽວພາຍໃນນະຄອນຫຼວງ. ທາງອົງການປົກຄອງຍັງໄດ້ຮ່ວມມືກັບອົງການຈັດຕັ້ງພາກເອກະຊົນ ເພື່ອກຳນົດໃຫ້ລົດໂດຍສານສາທາລະນະ (ລົດໂດຍສານປະຈຳທາງ) ຫັນໄປໃຊ້ພະລັງງານສະອາດ (ໄຟຟ້າ) ໄດ້ 30% ຂອງຈຳນວນທັງໝົດ; ນອກຈາກນັ້ນ, ຍັງໄດ້ຊຸກຍູ້ບັນດາເຈົ້າຂອງທຸລະກິດລົດເຊົ່າ, ລົດຂົນສົ່ງນັກຮຽນ ໃຫ້ນຳໃຊ້ພາຫະນະທີ່ເປັນມິດກັບສິ່ງແວດລ້ອມ.

ຢູ່ປະເທດອັງກິດ, ລັດຖະບານຂອງປະເທດນີ້ ໄດ້ປະກາດກ່ຽວກັບການກຳນົດ “ເຂດອາກາດສະອາດ” (Clean Air Zone) ໃນ 5 ຕົວເມືອງໃຫຍ່ ໃນປີ 2020 ເພື່ອແກ້ໄຂບັນຫາມົນລະພິດຈາກຄວັນລົດ (ໜັງສືພິມ Vientiane Time 19 ທັນວາ 2015) 5 ຕົວເມືອງໃຫຍ່ດັ່ງກ່າວປະກອບດ້ວຍນະຄອນເບີມິງແຮັມ, ລີດສ໌, ນອດຕິງແຮັມ, ເດີບີ ແລະ ຊາວແທມຕັນ. ພາຍໃນເຂດອາກາດສະອາດຢູ່ 5 ຕົວເມືອງໃຫຍ່ນີ້ ໄດ້ມີການຫ້າມລົດທີ່ສ້າງມົນລະພິດຫຼາຍທີ່ສຸດ ແລ່ນເຂົ້າເຂດເດັດຂາດ; ລົດທີ່ຖືວ່າເປັນໂຕການສ້າງມົນລະພິດແມ່ນຈຳພວກລົດທີ່ແລ່ນດ້ວຍນ້ຳມັນກາຊວນ, ລົດບັດ, ລົດແທັກຊີ ແລະ ລົດຕູ້ເກົ່າໆ. ສຳລັບຢູ່ນະຄອນຫຼວງລອນດອນ ທີ່ບໍ່ນອນໃນບັນຊີ 5 ຕົວເມືອງໃຫຍ່ນີ້ ແມ່ນໄດ້ມີກົດລະບຽບຄວບຄຸມລົດທີ່ແລ່ນເຂົ້າໃນເສັ້ນທາງໃຈກາງເມືອງໃນຊົ່ວໂມງແອອັດມາແຕ່ປີ2003ໂດຍມີການເກັບຄ່າທຳນຽມລົດທີ່ເປັນເປົ້າໝາຍ. ເຂດອາກາດດີໃນ 5 ຕົວເມືອງໃຫຍ່ທີ່ກ່າວມານັ້ນ ໄດ້ກຳນົດໃສ່ບໍລິເວນເສັ້ນທາງທີ່ມີສະພາບອາກາດເສື່ອມໂຊມທີ່ສຸດ, ລົດທີ່ເປັນເປົ້າໝາຍບໍ່ໃຫ້ແລ່ນເຂົ້າເຂດອາກາດດີ ແມ່ນຈຳພວກລົດບັນທຸກໃຫຍ່ໆໜັກໆ; ຂ່າວບອກວ່າໂຄງການເຂດອາກາດດີນີ້ ໄດ້ຕົວແບບມາແຕ່ປະເທດເຢຍລະມັນ ແລະ ປະເທດດານມາກ ທີ່ປະຕິບັດໄດ້ຜົນມາແລ້ວ.

## ຮຽນພາສາ ຜ່ານສຽງຫົວ



#ບ່າວກະບື

**ທ່ານ**ກວ້ານ ກັບຈາກໄປພົບທ່ານໝໍ, ເຂົາຮ້ອນໃຈຢາກເອົາເຄື່ອງຊ່ວຍຟັງຄູ່ໃໝ່ ລາຄາຫ້າແສນກີບ ອວດຝ່າຍບາງເມຍ.

“ຮູບຊົງມັນງາມບໍ່, ເຈົ້າຊື້ຢູ່ໃສ?” ເມຍຖາມ

“ໄດ້ເຈັດໂມງເຄິ່ງແລ້ວເດ” ທ່ານກວ້ານຕອບ.

#BAOKBU

Coming back from the doctor, Mr Kuan anxious to show his wife his new hearing aid that cost him 500.000 kip “It looks fine. Where do you buy it?” asked his wife.

“Half past seven,” replied Mr. Kuand.

## ຕາມພາສາ ກາຕູນ




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

## ສສຊ-ສສຂ...

(ຕໍ່ຈາກໜ້າ 6)

ໂຄງການ ມູນຄ່າ 1,16 ຕື້ກີບ ແລະ ໂຄງການເອກະຊົນພາຍໃນ ແລະ ຕ່າງປະເທດໃນ 21 ໂຄງການ, ມູນຄ່າ 127,63 ຕື້ກີບ ແລະ ທຶນຊ່ວຍເຫຼືອທາງການ ເພື່ອການພັດທະນາມີ 7 ໂຄງການ, ມູນຄ່າ 1,71 ຕື້ກີບ (ມູນນິທິເກື້ອຝົນເດັກ) ພ້ອມກັບບັນດາໜ້າວຽກອື່ນໆອີກທີ່ສຳຄັນ.

ໃນໂອກາດດັ່ງກ່າວທ່ານ ບຸນລ້ວນຊົມສີທາປັນຍາກຳມະການພັກແຂວງ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 7 ຮອງປະທານສະພາປະຊາຊົນແຂວງໄດ້ກ່າວວ່າ: ຈຸດປະສົງລົງມາຢ້ຽມຢາມ ແລະ ເຄື່ອນໄຫວພົບປະ ຜູ້ມີສິດເລືອກຕັ້ງໃນຄັ້ງນີ້ແມ່ນເພື່ອລົງມາຕິດຕາມກວດກາ ແລະ ຊຸກຍູ້ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແລະ ມະຕິກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາປະຊາຊົນແຂວງ ຊຸດທີ 2 ຈາກນັ້ນຄະນະຜູ້ແທນສະມາຊິກສະພາ ໄດ້ພົດປ່ຽນກັນມີຄຳເຫັນ ຊັກຖາມ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຄຳສະເໜີ ໃນການຈັດຕັ້ງປະຕິ ບັດແຕ່ລະ ຂົງເຂດວຽກງານ ໃນໄລຍະທີ່ຜ່ານມາ ເພື່ອເປັນແນວທາງໃນການນຳສະເໜີຕໍ່ຂັ້ນເທິງແລະພ້ອມກັນປັບປຸງແກ້ໄຂໃນຕໍ່ໜ້າ.

ໃນຕອນທ້າຍຂອງພິທີ ຄະນະຜູ້ແທນສາມະຊິກສະພາຍັງໄດ້ມອບໂທລະພາບຈໍແບນ ຂະໜາດ 55 ນີ້ວ ລວມມູນຄ່າ 19 ລ້ານກີບ, ໃຫ້ແກ່ຫ້ອງການສຶກສາທິການ ແລະກິລາເມືອງ ເພື່ອນຳໃຊ້ເຂົ້າໃນວຽກງານຮຽນ-ການສອນ ໂດຍໃຫ້ກຽດຕາງໜ້າກ່າວມອບຂອງທ່ານ ບຸນລ້ວນ ຊົມສີທາປັນຍາ ກຳມະການພັກແຂວງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ຮອງປະທານສະພາປະຊາຊົນແຂວງ ເປັນກຽດກ່າວຮັບຂອງ ທ່ານ ຊອນ ໄຊຍະວົງ ກຳມະການ ພັກເມືອງ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ພ້ອມດ້ວຍຜູ້ເຂົ້າຮ່ວມ ກອງປະຊຸມເປັນສັກຂີພິຍານ.

ໃນໂອກາດດຽວກັນນີ້; ຄະນະທີມງານຍັງໄດ້ລົງພາກສະໜາມຕົວຈິງຢູ່ໂຮງຮຽນ ສົມເມືອງຄອບ, ສຸກສາລາປາງໄຮ ແລະຄ້າຍຄຸມຄັງ-ດັດສ້າງເມືອງ ເພື່ອຢ້ຽມຢາມພ້ອມທັງເປັນການຕິດຕາມກວດກາໃນການຈັດຕັ້ງປະຕິບັດວຽກງານໃນການຮຽນ-ການສອນຂອງຄູ່ອາຈານຕໍ່ນ້ອງນັກຮຽນ ມີຄວາມສະດວກ ແລະຂໍ້ຫຍຸ້ງຍາກຄືແນວໃດເພື່ອເກັບກຳສະພາບລວມພ້ອມທັງຮັບຟັງການລາຍງານຂອງແພດໝໍໃນການປິ່ນປົວຄົນເຈັບ ແລະ ເຈົ້າໜ້າທີ ໃນການຈັດຕັ້ງປະຕິບັດກົດລະບຽບເພື່ອໃຫ້ຖືກຕ້ອງ, ສອດຄ່ອງກັບໜ້າທີ່ວຽກງານຂອງຕົນເອງຢ່າງຊັດເຈນ ແລະ ພາວະວິໄສ.

ແລະ ວັນທີ 29 ກັນຍາ 2025ນີ້ ທ່ານ ນາງ ວັນນາ ພົມວິສອນ ສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງທີ 7 ເລຂາທິການສະພາປະຊາຊົນແຂວງໄຊຍະບູລີ ພ້ອມດ້ວຍຄະນະ ໄດ້ນຳເອົາ ສັງກະສີ ແລະ ປູນຊີມັງ ໄປມອບໃຫ້ 2 ຄອບຄົວທີ່ໄດ້ຮັບຜົນກະທົບໄພພິບັດນ້ຳໄຫຼສຸຢູ່ທີ່ບ້ານນ້ຳຄ່ອມ ເມືອງຊຽງຮ່ອນ ແຂວງໄຊຍະບູລີ. ໂດຍການເຂົ້າຮ່ວມຮັບຂອງທ່ານແສງອາທິດ ລາວເປູຍຢາທໍ່ ເລຂາຄະນະບໍລິຫານງານພັກເມືອງຊຽງຮ່ອນ, ທ່ານ ສອນເຄືອ ແສງພະຈັນ ນາຍບ້ານໆນ້ຳຄ່ອມພ້ອມດ້ວຍອົງການປົກຄອງບ້ານ ແລະ ປະຊາຊົນ 2 ຄອບຄົວທີ່ໄດ້ຮັບຜົນກະທົບໄພພິບັດນ້ຳໄຫຼສຸເຮືອນໄດ້ຮັບຜົນເສຍຫາຍໜັກ ໃນຄັ້ງວັນທີ 23 ສິງຫາຜ່ານມາ. ໃນການມອບ-ຮັບໃນຄັ້ງນີ້ ປະກອບມີສັງກະສີ ຈຳນວນ 88 ແຜ່ນ ແລະ ປູນຊີມັງ ຈຳນວນ 60 ເປົາ ລວມມູນຄ່າ 17,072,000 ກີບ. ໃນການມອບຮັບໃນຄັ້ງນີ້ ທ່ານ ສອນເຄືອ ແສງພະຈັນ ນາຍບ້ານໆນ້ຳຄ່ອມ ໄດ້ສະແດງຄວາມຂອບໃຈຕໍ່ກັບ ທີມງານສະພາປະຊາຊົນແຂວງ, ພ້ອມດ້ວຍທີມງານທີ່ໄດ້ນຳເອົາເຄື່ອງມາຊ່ວຍ ເຫຼືອ ມາມອບໃຫ້ໃນຄັ້ງນີ້. ໃນໂອກາດດຽວກັນນີ້ ທ່ານ ນາງ ວັນນາ ພົມວິສອນ ສະມາຊິກສະພາແຫ່ງຊາດເລຂາທິການ ສະພາປະຊາຊົນແຂວງໄຊຍະບູລີ ຍັງໄດ້ໂອລົມຕໍ່ກັບ 2 ຄອບຄົວທີ່ໄດ້ຮັບຜົນກະທົບຕື່ມອີກ ສຳລັບງົບປະມານທີ່ນຳມາມອບໃນຄັ້ງນີ້ແມ່ນໄດ້ຮັບການສະໜັບສະໜູນຈາກສະພາແຫ່ງຊາດ.

**(ອິນທີ ຂຽວສີຟ້າ)**

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊີ້ນຳວຽກງານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ